ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ມັງກອນ 2024
ປີທີ 13
ສະບັບທີ 952
ລາຍສັບປະດາ

## ປະທານປະເທດ ໂອ້ລົມຕໍ່ກອງປະຊຸມຖອດຖອນບົດຮຽນວຽກງານ ສພຊ ແລະ ສພຂ ໄລຍະກາງສະໄໝ

ໃນໂອກາດເຂົ້າຮ່ວມປິດກອງປະຊຸມສະຫຼຸບຖອດຖອນບົດຮຽນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ຊຸດທີ II ໄລຍະກາງສະໄໝຂອງແຜນການ 5 ປີ (2021-2025) ໃນວັນທີ 22 ທັນວາຜ່ານມາ, ທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ



ໄດ້ກ່າວວ່າ: ກອງປະຊຸມກາງສະໄໝຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນຄັ້ງນີ້ ໄດ້ພ້ອມກັນຄົ້ນຄວ້າ, ປຶກສາຫາລື ແລະ ເປັນເອກະພາບຕໍ່ການຕີລາຄາດ້ານດີ, ດ້ານຄົງຄ້າງ ແລະ ສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງ ຢ່າງກົງໄປກົງມາ ແລະ ດ້ວຍຄວາມຮັບຜິດຊອບສູງ; ພ້ອມນັ້ນກໍກຳນົດທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມແຕ່ນີ້ຈົນເຖິງໝົດສະໄໝຂອງສະພາແຫ່ງຊາດຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ II ແລະ ໄດ້ມອບໝາຍຄວາມຮັບຜິດຊອບໃຫ້ກັນເພື່ອຈັດຕັ້ງປະຕິບັດຢ່າງລະອຽດ, ຄົບຖ້ວນ ແລະ ຈະແຈ້ງແລ້ວ. ດັ່ງນັ້ນ, ຈຶ່ງສະເໜີໃຫ້ເອົາໃຈໃສ່ບາງບັນຫາສຳຄັນດັ່ງນີ້: ກ່ຽວກັບການປະຕິບັດບົດບາດດ້ານນິຕິບັນຍັດ: ການສ້າງ ແລະ ປັບປຸງກົດໝາຍ ກໍຄືນິຕິກຳທີ່ສຳຄັນຂອງທ້ອງຖິ່ນ ແມ່ນພົວພັນກັບຫຼາຍພາກສ່ວນໃນອົງການລັດຢູ່ຂັ້ນສູນກາງ, ຂັ້ນແຂວງ; ຜ່ານມາເຖິງວ່າໄດ້ມີຄວາມເອົາໃຈໃສ່ ໂດຍພິຈາລະນາ, ຮັບຮອງເອົາກົດໝາຍໄດ້ຫຼາຍສະບັບ (ຮອດປັດ

ອ່ານຕໍ່ໜ້າ 3




## ຄະນະປະຈຳສະພາແຫ່ງຊາດ ພິຈາລະນາຫຼາຍບັນຫາສຳຄັນ



(ສພຊ) ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນທັນວາ 2023 ໄດ້ດຳເນີນໃນລະຫວ່າງວັນທີ 25-26 ທັນວາຜ່ານມາ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ; ມີບັນດາທ່ານຮອງປະທານ ແລະ ກຳມະການຄະນະປະຈຳສະພາແຫ່ງຊາດ ພ້ອມດ້ວຍພາກສ່ວນຕ່າງໆທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານຜົນການຮຽບຮຽງເນື້ອໃນຂອງຮ່າງກົດໝາຍ ຈຳນວນ 7 ສະບັບ ທີ່ຜ່ານການພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ IX; ຮ່າງຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການສ້າງແຜນການສ້າງ ແລະ ປັບປຸງກົດໝາຍ ໄລຍະປີ 2026-2030;

ອ່ານຕໍ່ໜ້າ 2

## ສນສ ສະຫຼຸບການເຄື່ອນໄຫວວຽກງານປີ 2023

(ສພຊ) ໃນວັນທີ 25 ທັນວາ 2023 ຢູ່ຫໍສະພາແຫ່ງຊາດ, ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ (ສນສ) ໄດ້ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ວາງທິດທາງແຜນການປີ 2024 ໂດຍການເປັນປະທານຂອງທ່ານ ສິນທະລາ ຫຼ້າສຸກສະໄໝ ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ; ເຂົ້າຮ່ວມມີບັນດາທ່ານຮອງປະທານກຳມາທິການ, ຄະນະສະຖາບັນ, ຫົວໜ້າ-ຮອງຫົວໜ້າກົມ, ຄະນະສູນ, ຄະນະພະແນກ ແລະ ລັດຖະກອນພາຍໃນ ສນສ ພ້ອມດ້ວຍເລຂາ-ຮອງເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງຄົ້ນຄວ້າສັງລວມ ແລະ ຂໍ້ມູນຂ່າວສານ



ຂອງສະພາປະຊາຊົນຂັ້ນແຂວງ ທີ່ເຂົ້າຮ່ວມກອງປະຊຸມຜ່ານອອນລາຍ.

ຈຸດປະສົງຂອງກອງປະຊຸມ ກໍເພື່ອເປັນການສະຫຼຸບຕີລາຄາການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ວາງທິດທາງແຜນການປີ 2024 ເຊິ່ງສຸມໃສ່ປະກອບຄຳເຫັນຕໍ່ຮ່າງບົດສະຫຼຸບຕີລາຄາການເຄື່ອນໄຫວວຽກງານຄົ້ນຄວ້າວິທະຍາສາດ, ຍົກສູງຂີດຄວາມສາມາດ ແລະ ຂໍ້ມູນຂ່າວສານ ປະຈຳປີ 2023 ແລະ ວາງທິດທາງແຜນ

ອ່ານຕໍ່ໜ້າ 4

## ກອງປະຊຸມຄົບຄະນະຂອງກຳມາທິການກົດໝາຍ ປະຈຳປີ 2023



(ສພຊ) ວັນທີ 23 ທັນວາ 2023 ຢູ່ຫໍສະພາແຫ່ງຊາດ ໄດ້ຈັດກອງປະຊຸມຄົບຄະນະຂອງກຳມາທິການກົດໝາຍ ໂດຍການປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ; ເຂົ້າຮ່ວມມີບັນດາທ່ານຮອງປະທານກຳມາທິການສະພາແຫ່ງຊາດ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ບັນດາທ່ານສະມາຊິກສະພາ

ອ່ານຕໍ່ໜ້າ 3

## ຮອງປະທານສະພາແຫ່ງຊາດ ພົບປະໂອ້ລົມພະນັກງານກອງບັນຊາການທະຫານນະຄອນຫຼວງວຽງຈັນ ແລະ 2 ກອງພົນໃຫຍ່

(ສພຊ) ໃນລະຫວ່າງວັນທີ 27-29 ທັນວາ 2023 ທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ໄດ້ຢ້ຽມຢາມພົບປະ, ໂອ້ລົມພະນັກງານຫຼັກແຫຼ່ງກອງບັນຊາການທະຫານນະຄອນຫຼວງວຽງຈັນ, ກອງພົນປືນໃຫຍ່ໜ້າດິນເອກະລາດ 605 ແລະ ກອງພົນໃຫຍ່ທະຫານຮາບ 941 ເນື່ອງໃນໂອກາດວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 75 ປີ (20 ມັງກອນ 1949-20 ມັງກອນ 2024) ທີ່ໃກ້ຈະມາເຖິງຕິດພັນກັບການເຜີຍ




ແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ XI ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ II ໂດຍມີທ່ານ ບຸນທານ ພຸດທະວົງສາ ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ ພ້ອມດ້ວຍຄະນະເຂົ້າຮ່ວມຕິດຕາມ.

ອ່ານຕໍ່ໜ້າ 4

# ຮອງປະທານສະພາແຫ່ງຊາດ ມອບເຂົ້າສານ ພ້ອມເຄື່ອງນຸ່ງ ແລະ ຜ້າຫົ່ມໃຫ້ເມືອງນາກາຍ




(ສພຊ) ໃນໂອກາດເຂົ້າຮ່ວມ ແລະ ເປັນປະທານກອງປະຊຸມເຝິກອົບຮົມການຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ 3 ແຂວງຄື: ຄຳມ່ວນ, ສະຫວັນນະເຂດ ແລະ ສາລະວັນ ກ່ຽວກັບການຕິດຕາມກວດກາຂົງເຂດວຽກງານຍຸຕິທຳ, ການຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍ ແລະ ການຕິດຕາມກວດກາວຽກງານຂອງອົງການກວດສອບ ທີ່ຈັດຂຶ້ນໃນລະຫວ່າງວັນທີ 18-19 ທັນວາ 2023, ໃນວັນທີ 18 ທັນວາ 2023 ທີ່ສະໂມສອນເມືອງນາກາຍແຂວງຄຳມ່ວນ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ນຳເອົາເຂົ້າສານ (ໄດ້ບິແບ່ງມາຈາກການສະໜັບສະໜູນຂອງບໍລິສັດ ວີຄອມ ເທັກໂນໂລຊີ ຈຳກັດຜູ້ດຽວ) ຈຳນວນ 200 ຖົງ (1ໂຕນ) ມູນຄ່າ 18 ລ້ານ 6 ແສນກີບ ພ້ອມເຄື່ອງນຸ່ງ 80 ຜືນ ມູນຄ່າ 2 ລ້ານກີບ ແລະ ຜ້າຫົ່ມຈຳນວນໜຶ່ງ ມອບໃຫ້ອຳນາດການປົກຄອງເມືອງນາກາຍ ເພື່ອນຳໄປຊ່ວຍເຫຼືອພໍ່ແມ່ປະຊາຊົນຜູ້ທຸກຍາກຢູ່ພາຍໃນເມືອງ ໂດຍມີທ່ານ ບຸນມີ ພິມມະສອນ ປະທານສະພາປະຊາຊົນແຂວງຄຳມ່ວນ ພ້ອມດ້ວຍຄະນະຕິດຕາມ ແລະ ພະນັກງານຫຼັກແຫຼ່ງຂອງເມືອງນາກາຍ ເຂົ້າຮ່ວມຢ່າງພ້ອມພຽງ ເຊິ່ງໄດ້ຮັບການຕ້ອນຮັບ ແລະ ລາຍງານກ່ຽວກັບທີ່ຕັ້ງຈຸດພິເສດ ແລະ ສະພາບລວມໃນການພັດທະນາເສດຖະກິດ-ສັງຄົມໂດຍສັງເຂບຈາກທ່ານນາງ ບົວກາ ແກ້ວມະນີ ເຈົ້າເມືອງງນາກາຍ ພ້ອມທັງສະເໜີຕໍ່ສະພາແຫ່ງຊາດດັ່ງນີ້: ປັບປຸງເສັ້ນທາງນາກາຍ-ນາຕານ, ຂໍໄຟຟ້າ 3 ສາຍ ແຕ່ເມືອງຫຼວງ-ນາຕານ ແລະ ຕົວເລກລັດຖະກອນ; ຈາກນັ້ນ ທ່ານຮອງປະທານສະພາແຫ່ງຊາດ ກໍໄດ້ໂອ້ລົມຕໍ່ອຳນາດການປົກຄອງ, ພະນັກງານຫຼັກແຫຼ່ງຂອງເມືອງ ໂດຍທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຜົນງານອັນພົ້ນເດັ່ນຂອງເມືອງທີ່ຍາດມາໄດ້ ທັງສະເໜີໃຫ້ສືບຕໍ່ຮັກສາມູນເຊື້ອອັນດີງາມ, ຊຸກຍູ້ທາງດ້ານການທ່ອງທ່ຽວ ເພາະວ່າເມືອງນາກາຍມີທ່າແຮງທາງດ້ານການທ່ອງທ່ຽວຫຼາຍບ່ອນທີ່ສວຍສົດງົດງາມ ເພື່ອເປັນທ່າແຮງສິ່ງເສີມສ້າງເສດຖະກິດຂອງເມືອງ.

**(ສອນສັກ ວັນວິໄຊ)**

# ມອບ-ຮັບ ວຽກງານຫ້ອງມູນເຊື້ອສະພາແຫ່ງຊາດ




(ສພຊ) ອີງຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍການຮັບຮອງເອົາຫ້ອງມູນເຊື້ອສະພາແຫ່ງຊາດເປັນກົງຈັກໜຶ່ງທຽບເທົ່າພະແນກ ຂຶ້ນກັບກົມສື່ມວນຊົນຂອງຄະນະເລຂາທິການສະພາແຫ່ງຊາດ, ໃນວັນທີ 15 ທັນວາ 2023 ທີ່ຫໍສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບວຽກງານຫ້ອງມູນເຊື້ອສະພາແຫ່ງຊາດ ລະຫວ່າງທ່ານ ປອ. ເພັດພອນໃຈ ສິນລະປະກິດ ຫົວໜ້າຫ້ອງ

ອ່ານຕໍ່ໜ້າ 8

# ຖອດຖອນບົດຮຽນການເປັນເຈົ້າພາບຈັດກອງປະຊຸມ CLV



(ສພຊ) ໃນຕອນເຊົ້າຂອງວັນທີ 28 ທັນວາ 2023 ທີ່ຫໍສະພາແຫ່ງຊາດ ໄດ້ຈັດກອງປະຊຸມຖອດຖອນບົດຮຽນກ່ຽວກັບການເປັນເຈົ້າພາບຈັດກອງປະຊຸມສຸດຍອດລັດຖະສະພາກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1 ແລະ ຕ້ອນຮັບປະທານສະພາແຫ່ງຊາດກຳປູເຈຍ ແລະ ຫວຽດນາມ ມາຢ້ຽມຢາມລາວ, ໂດຍການເປັນປະທານຂອງທ່ານ ສົມຍາ ປຣະເສີດປະທານກຳມາທິການການຕ່າງປະເທດ; ເຂົ້າຮ່ວມມີບັນດາທ່ານປະທານ-ຮອງປະທານກຳມາທິການທີ່ກ່ຽວຂ້ອງ, ຄະນະເລຂາທິການສະພາແຫ່ງຊາດ, ອະນຸກຳມະການຕ່າງໆ, ຄະນະກົມ, ຄະນະພະແນກ ແລະ ພະນັກງານທີ່ກ່ຽວຂ້ອງ.

ກອງປະຊຸມ ໄດ້ຮັບຟັງການລາຍງານຜົນການດຳເນີນ ແລະ ການຮັບໃຊ້ກອງປະຊຸມສຸດຍອດລັດຖະສະພາ CLV ຄັ້ງທີ 1, ການຕ້ອນຮັບປະທານສະພາແຫ່ງຊາດກຳປູເຈຍ ແລະ ຫວຽດນາມ ທີ່ໄດ້ເດີນທາງມາ

ອ່ານຕໍ່ໜ້າ 8




*# ຄັດໂດຍ: ທອມສະນິດ*

❒ ການພັດທະນາເຂດເສດຖະກິດພິເສດ ໃນປີ 2023 ສາມາດດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ໄດ້ທັງໝົດ 178 ບໍລິສັດ ກວມເອົາຂະແໜງອຸດສາຫະກຳ 18 ບໍລິສັດ ການຄ້າ 30 ບໍລິສັດ ບໍລິການ 127 ບໍລິສັດ ແລະ ກະສິກຳ 3 ບໍລິສັດ ໂດຍມີທຶນທັງໝົດ 520 ລ້ານກວ່າໂດລາ ແລະ ທຶນຈົດທະບຽນ 178 ລ້ານກວ່າໂດລາ ນອກຈາກບໍລິສັດທີ່ເຂົ້າມາລົງທຶນແລ້ວ ຍັງມີບັນດາຫ້າງຮ້ານ ແລະ ຫົວໜ່ວຍວິສາຫະກິດຈຳນວນໜຶ່ງ ທີ່ເຂົ້າມາລົງທຶນພາຍໃນເຂດທັງໝົດ 2.645 ຫົວໜ່ວຍ ມອບພັນທະເຂົ້າງົບປະມານຂອງລັດ ໄດ້ທັງໝົດ174 ຕື້ກວ່າກີບ ສ້າງວຽກເຮັດງານທຳໄດ້ທັງໝົດ 3.644 ຄົນ (ລາວ 3.572 ຄົນ ແລະ ຕ່າງປະເທດ 72 ຄົນ) ການສ້າງແຮງງານໃນໄລຍະນີ້ຫຼຸດລົງຍ້ອນອັດຕາເງິນເຟີ້ ຈຶ່ງເຮັດໃຫ້ແຮງງານລາວຫຼັ່ງໄຫຼອອກໄປເຮັດວຽກຢູ່ປະເທດເພື່ອນບ້ານເປັນຈຳນວນຫຼາຍ ໄດ້ນຳເຂົ້າວັດຖຸດິບ ເຄື່ອງກົນຈັກ ແລະ ອຸປະກອນເພື່ອມາຮັບໃຊ້ການຜະລິດ ແລະ ກໍ່ສ້າງພື້ນຖານໂຄງລ່າງ ມູນຄ່າທັງໝົດ 1,7 ຕື້ກວ່າໂດລາ ແລະ ສົ່ງອອກສິນຄ້າ ມູນຄ່າທັງໝົດ 302 ລ້ານກວ່າໂດລາ.

**ໜສພ. ວຽງຈັນໃໝ່ 26/12/2023**

❒ ການຈັດຕັ້ງປະຕິບັດວຽກງານໂພຊະນາການຢູ່ແຂວງຊຽງຂວາງ ໃນໄລຍະ 1 ປີຜ່ານມາ, ເຫັນໄດ້ວ່າໃນ 10 ຕົວຊີ້ວັດທີ່ຕິດພັນກັບວຽກງານຂອງແມ່ ແລະ ເດັກນັ້ນ ແມ່ນບັນລຸຕາມຄາດໝາຍ ໂດຍສະເພາະຕົວຊີ້ວັດກ່ຽວກັບນ້ຳໜັກ ລວງສູງຂອງເດັກລຸ່ມ 5 ປີ ທີ່ບໍ່ໄດ້ມາດຕະຖານ ແມ່ນໄດ້ບັນລຸຕາມຄາດໝາຍອັດຕາການຕາຍ ຂອງເດັກລຸ່ມ 1 ປີ ແລະ ລຸ່ມ 5 ປີ ແລະ ອັດຕາການຕາຍຂອງແມ່ ກໍບັນລຸຄາດໝາຍໃນປີນີ້ ຍັງເຫຼືອພຽງອັດຕາການສັກຢາກັນພະຍາດເທົ່ານັ້ນ ທີ່ຍັງບໍ່ບັນລຸຕາມຄາດໝາຍ ເຖິງວ່າອັດຕາການສັກຢາກັນພະຍາດຈະບໍ່ບັນລຸຄາດໝາຍ ແຕ່ກໍຖືວ່າມີຄວາມຄືບໜ້າຖ້າທຽບ ໃສ່ປີທີ່ຜ່ານມາ. ສຳລັບແຂວງຊຽງຂວາງ ມີທັງໝົດ 7 ເມືອງ ໃນນັ້ນ, ມີແຕ່ 4 ເມືອງ ຄື: ເມືອງຄຳ, ເມືອງໜອງແຮດ, ເມືອງພູກູດ ແລະ ເມືອງຜາໄຊ ທີ່ໄດ້ຮັບການຈັດຕັ້ງປະຕິບັດວຽກງານສຸຂະພາບຈະເລີນພັນ ໃນປີ 2022-2023 ອັດຕາການຂາດສານອາຫານໃນເດັກລຸ່ມ 5 ປີດີຂຶ້ນ ອັດຕາການຕາຍຂອງແມ່ ແລະ ເດັກຫຼຸດລົງຢູ່ໃນອັດຕາສ່ວນທີ່ດີ ການເຂົ້າເຖິງການບໍລິການທີ່ມີແພດຊ່ວຍ ແມ່ນເພີ່ມຂຶ້ນ ໃນປີ 2022 ນ້ຳໜັກ ທີ່ບໍ່ໄດ້ມາດຕະຖານຂອງເດັກລຸ່ມ 5 ປີລົງມາ ມີ 18% ແລະ ປີ 2023 ມີພຽງແຕ່ 14%.

**ໜສພ. ວຽງຈັນໃໝ່ 26/12/2023**

❒ ກົມຕຳຫຼວດຈະລາຈອນ ກະກຽມຄວາມພ້ອມຮອບດ້ານເພື່ອສະກັດກັ້ນອຸບັດເຫດທີ່ຈະເກີດຂຶ້ນຕາມຖະໜົນ ໃນໄລຍະສະເຫຼີມສະຫຼອງສົ່ງທ້າຍປີເກົ່າ-ຕ້ອນຮັບປີໃໝ່ສາກົນ 2024 ເປັນຕົ້ນ ໄດ້ອອກຄຳແນະນຳ, ກະກຽມພາຫະນະ, ອຸປະກອນຮັບໃຊ້, ຈັດກຳລັງລົງຕັ້ງຈຸດກວດກາການສັນຈອນ. ທັງນີ້, ກໍເພື່ອເຮັດໃຫ້ການສະຫຼອງວັນດັ່ງກ່າວມີຄວາມເບີກບານມ່ວນຊື່ນ ແລະ ປາສະຈາກຜົນເສຍຫາຍທາງດ້ານຊີວິດ, ສຸຂະພາບ ແລະ ຊັບສິນ ທີ່ເກີດຈາກການເກີດອຸບັດເຫດຈະລາຈອນທາງບົກ ໃນໄລຍະປີໃໝ່ສາກົນ 2024 ນີ້.

**ໜສພ. ປະຊາຊົນ 28/12/2023**

## ປະທານປະເທດ...

(ຕໍ່ຈາກໜ້າ 1)

ຈຸບັນມີຫຼາຍກວ່າ 160 ສະບັບ) ສະພາປະຊາຊົນຂັ້ນແຂວງ ກໍໄດ້ພິຈາລະນາ, ຮັບຮອງເອົານິຕິກຳທີ່ສຳຄັນຂອງທ້ອງຖິ່ນໄດ້ຫຼາຍສະບັບ ເຊິ່ງເປັນພື້ນຖານດ້ານນິຕິກຳໃຫ້ແກ່ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍໃຫ້ມີຄຸນນະພາບສູງ. ກ່ຽວກັບບົດບາດການຕົກລົງບັນຫາສຳຄັນພື້ນຖານຂອງຊາດ, ຂອງທ້ອງຖິ່ນ ອີງໃສ່ຄວາມເລັ່ງທວງຂອງສະພາບການ ກໍຄືຄວາມຮຽກຮ້ອງຕ້ອງການຍົກລະດັບການພັດທະນາປະເທດຊາດໃນເງື່ອນໄຂໃໝ່ນີ້, ສະພາຕ້ອງເພີ່ມທະວີບົດບາດເປັນໃຈກາງ, ເປັນເຈົ້າການສົມທົບກັບບັນດາອົງການໃນລະບົບການເມືອງ ປຶກສາຫາລື, ຄົ້ນຄວ້າບັນຫາ ແລະ ມີຄວາມເປັນເອກະພາບແຕ່ຫົວທີ; ບັນຫາສຳຄັນແມ່ນການຜັນຂະຫຍາຍເນື້ອໃນຈິດໃຈຂອງແນວທາງ, ແຜນນະໂຍບາຍຂອງພັກ, ທິດຊີ້ນຳຂອງສູນກາງພັກ, ຂອງກົມການເມືອງສູນກາງພັກ, ຂອງຄະນະພັກທ້ອງຖິ່ນ ໃຫ້ເປັນອັນລະອຽດ ແນໃສ່ຍົກສູງຄຸນນະພາບໃນການຄົ້ນຄວ້າ, ພິຈາລະນາບັນຫາພື້ນຖານສຳຄັນຂອງຊາດ ແລະ ຂອງທ້ອງຖິ່ນ ໃຫ້ຖືກທິດ, ວ່ອງໄວ ແລະ ທັນກັບສະພາບການ, ອັນໃດໄປຕາມຂັ້ນຕອນກົດໝາຍ, ອັນໃດທີ່ເປັນບັນຫາເລັ່ງດ່ວນທີ່ຕ້ອງໄດ້ແກ້ໄຂ ດ້ວຍລັກສະນະຮີບດ່ວນ. ສຳລັບບົດບາດການຕິດຕາມ, ກວດກາ: ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງສົມທົບກັບອົງການກວດກາ, ອົງການກວດສອບ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ເພີ່ມທະວີການຕິດຕາມກວດກາການເຄົາລົບ, ປະຕິບັດລັດຖະທຳມະນູນ, ກົດໝາຍ ຂອງບັນດາອົງການລັດຊອກໃຫ້ເຫັນດ້ານດີ, ດ້ານຕັ້ງໜ້າ ເພື່ອຊຸກຍູ້ສົ່ງເສີມ ແລະ ເສີມຂະຫຍາຍສູ່ລວງເລິກຢ່າງກວ້າງຂວາງ; ພ້ອມນັ້ນ ກໍແກ້ໄຂບັນຫາທີ່ເກີດຂຶ້ນໃຫ້ຖືກຕ້ອງ ແລະ ແທດກັບຕົວຈິງ ໂດຍສະເພາະແມ່ນສູ້ຊົນໃຫ້ຜົນການຕິດຕາມກວດກາໄດ້ຮັບການແກ້ໄຂຢ່າງຈິງຈັງ ແລະ ທັນການ, ພວກເຮົາຕ້ອງສົມທົບແໜ້ນທັງສອງດ້ານລະຫວ່າງ “ການຕຳນິ” ກັບ “ການສະເໜີທາງອອກ” ໄປພ້ອມໆກັນຢ່າງສ້າງສັນ. ຕໍ່ກັບການປະຕິບັດປ່ຽນແປງໃໝ່ດ້ານຈິນຕະນາການກ່ຽວກັບເນື້ອໃນການສືບຕໍ່ບູລະນະລັດປະຊາທິປະໄຕ ປະຊາຊົນ, ປັບປຸງແບບແຜນ, ກົນໄກປະສານງານ ຂອງບັນດາອົງການອຳນາດລັດດ້ວຍກັນ ກໍຄືການເສີມຂະຫຍາຍປະຊາທິປະໄຕໃນລະບົບສະພາຂອງພວກເຮົານັ້ນ ຢາກຂໍໃຫ້ທົບທວນກ່ຽວກັບລັກສະນະລວມຂອງສະພາຂອງປະເທດຕ່າງໆໃນໂລກ ທີ່ມີລະບອບການເມືອງການປົກຄອງແຕກຕ່າງກັນນັ້ນວ່າ: ລະບົບອຳນາດລັດຂອງປະເທດໃດກໍຕາມ ປະກອບດ້ວຍລັດຖະສະພາ, ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ທ້ອງຖິ່ນ; ບາງປະເທດມີສອງສະພາຄືສະພາສູງ ແລະ ສະພາຕ່ຳ ທີ່ມີການແບ່ງງານ, ແບ່ງພາລະບົດບາດ ເພື່ອເຮັດໜ້າທີ່ສ້າງກົດໝາຍ, ຮັບຮອງກົດໝາຍ, ຕິດຕາມ ແລະ ກວດກາອົງການບໍລິຫານ ແລະ ຕຸລາການ ໃນການປະຕິບັດກົດໝາຍ. ສະເໜີບັນດາທ່ານສືບຕໍ່ຄົ້ນຄວ້າ ແລະ ນຳພາຊີ້ ນຳການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ທັງໃນສະເພາະໜ້າແລະຍາວນານ; ສຸມໃສ່ສ້າງພື້ນຖານ ແລະ ກະກຽມບັນດາເງື່ອນໄຂໃຫ້ແກ່ການຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ ຂອງພັກສູ່ລວງເລິກ.

ທ່ານໄດ້ເນັ້ນຕື່ມອີກວ່າ: ພາລະບົດບາດສຳຄັນຕົ້ນຕໍອັນໜຶ່ງໃນທ້າຍສະໄໝຂອງສະພາແຫ່ງຊາດຊຸດທີ IX ແມ່ນການປັບປຸງລັດຖະທຳມະນູນ, ກົມການເມືອງສູນກາງພັກໄດ້ຕົກລົງໃຫ້ສະພາແຫ່ງຊາດ ແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄວ້າ, ປັບປຸງລັດຖະທຳມະນູນ, ກົດໝາຍການປົກຄອງທ້ອງຖິ່ນ ແລະ ກົດໝາຍກ່ຽວຂ້ອງອື່ນໆ ເພື່ອຮອງຮັບການຜັນຂະຫຍາຍແຜນນະໂຍບາຍໃຫຍ່ຂອງພັກໃນການປັບປຸງລະບຽບ, ກົນໄກ, ຂອດຂັ້ນການນຳພາຂອງຄະນະພັກ ແລະ ການຄຸ້ມຄອງບໍລິຫານຂອງລັດ, ຂອງອົງການປົກຄອງທ້ອງຖິ່ນ ເຊັ່ນ: ການບໍ່ຄວບຕຳແໜ່ງອັນໃດ ແລະ ສາມາດຄວບຕຳແໜ່ງໃດ ສຳລັບຜູ້ເປັນເລຂາຄະນະພັກຂອງການນຳຂັ້ນແຂວງ, ນະຄອນຫຼວງວຽງຈັນ, ເມືອງ, ນະຄອນ; ການຄົ້ນຄວ້າ ແລະ ສ້າງໃຫ້ຂັ້ນແຂວງ ຫຼື ນະຄອນ ຂຶ້ນກັບສູນກາງໂດຍກົງ; ການສ້າງຕັ້ງຕາແສງຄືນໃໝ່ ເຊິ່ງເປັນຂັ້ນປົກຄອງລັດລຸ່ມສຸດຂອງປະເທດເຮົາ ຫຼືໃນຕໍ່ໜ້ານີ້ ຍັງຕ້ອງສືບຕໍ່ຄົ້ນຄວ້າຄວາມສາມາດ ຫຼືຄວາມເປັນໄປໄດ້, ມີຄວາມຈຳເປັນ ຫຼືບໍ່ຈຳເປັນ ໃນການສ້າງຕັ້ງສະພາປະຊາຊົນຂັ້ນເມືອງ ຫຼືຈະເອົາການບູລະນະສະພາຂັ້ນແຂວງໃຫ້ສົມບູນເສຍກ່ອນ. ເພີ່ມທະວີຄວາມສາມັກຄີເປັນເອກະພາບ, ຄວາມຮັບຜິດຊອບການເມືອງຂອງສະມາຊິກສະພາແຫ່ງຊາດ ແລະ ຜູ້ທີ່ເຮັດວຽກງານໃນອົງການນິຕິບັນຍັດ. ສືບຕໍ່ເພີ່ມທະວີການພົວພັນຮ່ວມມືກັບລັດຖະສະພາຂອງປະເທດເພື່ອນມິດ ແລະ ການເຊື່ອມໂຍງກັບລັດຖະສະພາສາກົນຢ່າງເປັນເຈົ້າການ ບົນພື້ນຖານແນວທາງການຕ່າງປະເທດ ເອກະລາດ, ມິດຕະພາບ ແລະ ການຮ່ວມມືເພື່ອພັດທະນາ; ສະພາແຫ່ງຊາດ ສືບຕໍ່ຕັ້ງໜ້າເຄື່ອນໄຫວພົວພັນວຽກງານລັດຖະສະພາໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ ຕິດພັນກັບການເຄື່ອນໄຫວການທູດປ້ອງກັນເຫດ ແລະ ບຸກທະລຸ ເພື່ອພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ, ຕ້ອງຕິດພັນກັບການຍູ້ແຮງການພົວພັນຮ່ວມມື ແລະ ເອົາໃຈໃສ່ວຽກງານອື່ນໆ.

ໃນກອງປະຊຸມ, ທ່ານນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ລາຍງານໂດຍຫຍໍ້ວ່າ: ກອງປະຊຸມຄັ້ງນີ້ ຈຸດປະສົງຕົ້ນຕໍຄື: ເພື່ອສະຫຼຸບຕີລາຄາການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ II ໄລຍະກາງສະໄໝຂອງແຜນການ 5 ປີ (2021-2025) ແລະ ກຳນົດທິດທາງແຜນການເຄື່ອນໄຫວວຽກງານແຕ່ນີ້ຮອດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ III; ປຶກສາຫາລື, ແລກປ່ຽນບົດຮຽນລະຫວ່າງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງກັບບັນດາອົງການຈັດຕັ້ງຂອງພັກ-ລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ; ເປັນການໂຄສະນາເຜີຍແຜ່ພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ໃຫ້ບັນດາອົງການຈັດຕັ້ງທຸກພາກສ່ວນ ແລະ ສັງຄົມໄດ້ຮັບຮູ້, ມີຄວາມເຂົ້າໃຈຫຼາຍຂຶ້ນ.

ກອງປະຊຸມໄດ້ຮັບຟັງການລາຍງານຂອງຕາງໜ້າຄະນະປະຈຳສະພາແຫ່ງຊາດ ເຊິ່ງໄດ້ຕີລາຄາຄືນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແຕ່ປີ 2021-2023 ເປັນຕົ້ນດ້ານວຽກການເມືອງ-ແນວຄິດ, ດ້ານການປະຕິບັດໜ້າທີ່ການເມືອງ (ດ້ານນິຕິບັນຍັດ ແລະ ນິຕິກຳຂອງທ້ອງຖິ່ນ, ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງຊາດ ແລະ ຂອງທ້ອງຖິ່ນ, ແລະ ດ້ານການຕິດຕາມກວດກາ), ວຽກງານການຕ່າງປະເທດ, ວຽກງານການສ້າງຄວາມເຂັ້ມແຂງ, ວຽກງານພົວພັນປະສານງານ, ທິດທາງແຜນການທ້າຍສະໄໝຈົນຮອດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດຊຸດທີ X ແລະ ອື່ນໆ.



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ແຫ່ງຊາດ ທີ່ສັງກັດກຳມາທິການກົດໝາຍ, ຕາງໜ້າຄະນະເລຂາທິການສະພາແຫ່ງຊາດ, ສະຖາບັນຄົ້ນຄວ້ານິຕິກຳ, ຫົວໜ້າ-ຮອງຫົວໜ້າກົມ ແລະ ພະນັກງານ-ລັດຖະກອນ ຂອງກຳມາທິການກົດໝາຍ.

ກອງປະຊຸມ ໄດ້ຮັບຟັງບົດສະຫຼຸບການເຄື່ອນໄຫວວຽກງານກາງສະໄໝ (ປີ 2021-2023), ທິດທາງວຽກງານທ້າຍສະໄໝ (ປີ 2023-2025), ການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2024 ຂອງກຳມາທິການກົດໝາຍ; ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍການສ້າງແຜນການສ້າງ ແລະ ປັບປຸງກົດໝາຍ ໄລຍະ 2026-2030 ຂອງສະພາແຫ່ງຊາດ; ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ ໃນໄລຍະທີ່ຜ່ານມາ ແລະ ມະຕິກອງປະຊຸມຄົບຄະນະ ຂອງກຳມາທິການກົດໝາຍ ປະຈຳປີ 2023.

ໃນຕອນທ້າຍ, ປະທານກອງປະຊຸມຍັງໄດ້ເນັ້ນບາງຈຸດຄື ປັບປຸງບົດສະຫຼຸບການເຄື່ອນໄຫວວຽກງານກາງສະໄໝ (ປີ 2021-2023), ທິດທາງແຜນການເຄື່ອນໄຫວວຽກງານທ້າຍສະໄໝ (ປີ 2023-2025), ການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2024 ຂອງກຳມາທິການກົດໝາຍ ໃຫ້ມີເນື້ອໃນຄົບຖ້ວນ, ຖືກກັບການເຄື່ອນໄຫວວຽກງານຕົວຈິງ ຕາມການປະກອບຄຳເຫັນຂອງກອງປະຊຸມ; ປັບປຸງຄຳແນະນຳ ຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍການກະກຽມສ້າງແຜນການສ້າງ ແລະ ປັບປຸງກົດໝາຍ ໄລຍະ 2026-2030 ແລ້ວລາຍງານຄະນະປະຈຳສະພາແຫ່ງຊາດ ໃນທ້າຍເດືອນທັນວານີ້ ເພື່ອນຳໄປຈັດຕັ້ງຜັນຂະຫຍາຍໂດຍໄວ; ປັບປຸງຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ ແລ້ວສະເໜີຄະນະປະຈຳສະພາແຫ່ງຊາດ ພິຈາລະນາລົງລາຍເຊັນປະກາດໃຊ້ໂດຍໄວ ເພື່ອນຳໄປປະສານສົມທົບກັບບັນດາກະຊວງ-ອົງການທີ່ເປັນເຈົ້າຂອງກົດໝາຍ ແລະ ບັນດາກຳມາທິການທີ່ກ່ຽວຂ້ອງ ຈັດຕັ້ງຜັນຂະຫຍາຍ ແລະ ໃຫ້ທັນສະຫຼຸບສັງລວມລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີIX; ສຸມໃສ່ຮຽບຮຽງບັນດາກົດໝາຍທີ່ໄດ້ຮັບຮອງຈາກກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ສຳເລັດໂດຍໄວ ເພື່ອໃຫ້ທັນໄດ້ປະກາດໃຊ້ ຕາມກົດໝາຍ ແລະ ລະບຽບການກຳນົດ; ຮີບຮ້ອນປະສານສົມທົບກັບບັນດາກະຊວງ-ອົງການ ທີ່ເປັນເຈົ້າຂອງກົດໝາຍ ແລະ ບັນດາກຳມາທິການທີ່ກ່ຽວຂ້ອງ ເພື່ອກະກຽມແຜນການສ້າງ ແລະ ປັບປຸງກົດໝາຍ ປີ 2024 ເພື່ອລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ແລະ ໃຫ້ໄດ້ປະກາດໃຊ້ໃນຕົ້ນປີ 2024; ສືບຕໍ່ປັບປຸງການປະສານງານໃນວຽກງານການສ້າງ ແລະ ປັບປຸງກົດໝາຍຢູ່ພາຍໃນສະພາແຫ່ງຊາດ ແລະ ບັນດາອົງການທີ່ມີສິດສະເໜີສ້າງ ແລະ ປັບປຸງກົດໝາຍໃຫ້ແໜ້ນແຟ້ນກົມ ກຽວກັນ ເຮັດໃຫ້ວຽກງານສ້າງ ແລະ ປັບປຸງກົດໝາຍມີປະສິດທິພາບ ແລະ ປະສິດທິຜົນສູງກວ່າເກົ່າ; ປັບປຸງກົນໄກ ແລະ ວິທີການທາບທາມຮ່າງກົດໝາຍໃຫ້ແທດຕົວຈິງ, ປະດິດສ້າງ ແລະ ມີປະສິດທິຜົນກວ່າເກົ່າ ໂດຍຖືເອົາຄະນະສະມາຊິກສະພາແຫ່ງຊາດ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນໃຈກາງ; ສືບຕໍ່ຮ່າງແຜນການຕິດຕາມ ກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ປະຈຳປີ 2024 ແລະ ແຜນປີ 2025 ຂອງກຳມາທິການກົດໝາຍໃຫ້ສຳເລັດໂດຍໄວ ເພື່ອປະກອບສ່ວນລົງຊຸກຍູ້ກະຊວງ-ອົງການ ແລະ ທ້ອງຖິ່ນ ເອົາໃຈໃສ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງຕົນ ໃຫ້ຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການ ບັນລຸຕາມຄາດໝາຍທີ່ກຳນົດໄວ້; ເອົາໃຈໃສ່ ປະສານສົມທົບກັບບັນດາກະຊວງ-ອົງການທີ່ເປັນເຈົ້າຂອງກົດໝາຍ ເພື່ອສ້າງເງື່ອນໄຂຕ່າງໆ ໃນການນຳເອົາບັນດາກົດໝາຍທີ່ໄດ້ປະກາດໃຊ້ແລ້ວລົງໂຄສະນາເຜີຍແຜ່ຢູ່ສູນກາງ ແລະ ທ້ອງຖິ່ນ ເພື່ອໃຫ້ປະຊາຊົນລາວບັນດາເຜົ່າ ໄດ້ຮັບຮູ້, ເຂົ້າໃຈຢ່າງກວ້າງຂວາງ ດ້ວຍຫຼາຍວິທີ, ຫຼາຍຮູບການ; ເອົາໃຈໃສ່ປະສານສົມທົບກັບ ບັນດາກະຊວງ-ອົງການ ທີ່ມີສິດສະເໜີໃຫ້ຄະນະປະຈຳສະພາແຫ່ງຊາດ ພິຈາລະນາຕີຄວາມໝາຍ ແລະ ອະທິບາຍກົດໝາຍ ເພື່ອຍົກລະດັບວຽກງານດັ່ງກ່າວໃຫ້ຫຼາຍຂຶ້ນທັງທາງດ້ານປະລິມານ ແລະ ຄຸນນະພາບ, ມີຄວາມວ່ອງໄວ, ມີຄຳຕອບຄຳອະທິບາຍທີ່ຈະແຈ້ງ, ຖືກຕ້ອງ, ສອດຄ່ອງກັບກົດໝາຍ ແລະ ລະບຽບການຕ່າງໆ.

**(ນາງ ກຸກກິກ ບຸດດາໄຊ)**

ຜູ້ແທນປະຊາຊົນ
ສຽງຂອງສະພາແຫ່ງຊາດ PHOUTHEN PASAXON



## ຮອງປະທານ...

(ຕໍ່ຈາກໜ້າ 1)

ທ່ານ ພັອ. ໂສພາວັນ ທໍາມະເທວາ ເລຂາຄະນະພັກກອງບັນຊາການ, ຫົວໜ້າການເມືອງກອງບັນຊາການທະຫານນະຄອນຫຼວງວຽງຈັນ ໄດ້ລາຍງານຫຍໍ້ກ່ຽວກັບການເຕີບໃຫຍ່ຂະຫຍາຍຕົວຂອງກອງພັນໃຫຍ່ດັ່ງກ່າວ ແລະ ຜົນງານການເຄື່ອນໄຫວເຮັດໜ້າທີ່ການເມືອງຂອງກົມກອງໃນໄລຍະຜ່ານມາ ເຊິ່ງທ່ານໃຫ້ຮູ້ວ່າ: ກອງບັນຊາ ການທະຫານນະຄອນຫຼວງວຽງຈັນ ສ້າງຕັ້ງຂຶ້ນໃນວັນທີ 06 ເມສາ 1976 ເປັນກໍາລັງປະກອບອາວຸດທ້ອງຖິ່ນ, ສາຍຕັ້ງຂຶ້ນກັບກະຊວງປ້ອງກັນປະເທດ, ສາຍຂວາງຂຶ້ນກັບຄະນະພັກນະຄອນຫຼວງ ແລະ ຄະນະກໍາມະການ ປກຊ-ປກສ ນະຄອນຫຼວງວຽງຈັນ; ມີໜ້າທີ່ເຮັດໃຫ້ນະຄອນຫຼວງວຽງຈັນ ມີສະຖຽນລະພາບທາງດ້ານການເມືອງ ມີຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ, ເຮັດວຽກງານກໍ່ສ້າງຮາກຖານການເມືອງ, ກຽມພ້ອມ ສູ້ຮົບ ແລະ ກູ້ໄພພິບັດ; ເອົາໃຈໃສ່ປັບປຸງກໍ່ສ້າງກໍາລັງໃຫ້ໜັກແໜ້ນທາງດ້ານການເມືອງ-ແນວຄິດ, ເຂັ້ມແຂງດ້ານ ການຈັດຕັ້ງ, ກໍ່ສ້າງພັກ-ພະນັກງານ, ຕັ້ງໜ້າເຝິກແອບຮໍ່າຮຽນ, ເຮັດວຽກງານແກ້ໄຂຊີວິດການເປັນຢູ່ບົນຈິດໃຈ “ເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ” ປະຕິບັດຕາມທິດ 4 ປູກ 4 ລ້ຽງ, ກໍ່ສ້າງຄ້າຍຄູ, ທີ່ຢູ່ອາໄສໃຫ້ແໜ້ນໜາຖາວອນ, ເຮັດວຽກງານພົວພັນກັບຕ່າງປະເທດຕາມແນວທາງຂອງພັກ ແລະ ການຊີ້ນໍາ ຂອງຂັ້ນເທິງ. ການເຄື່ອນໄຫວປະຕິບັດໜ້າທີ່ໃນຊຸມປີຜ່ານມາ ໄດ້ຫັນເອົາພະນັກງານລົງກໍ່ສ້າງຮາກຖານການເມືອງ ຕາມ 4 ເນື້ອໃນ 4 ຄາດໝາຍຕິດພັນກັບວຽກງານ 3 ສ້າງ ແລະ ສ້າງທ່າສະໜາມສົງຄາມປະຊາຊົນ 3 ຂັ້ນ; ໄດ້ສຸມໃສ່ສ້າງຄອບຄົວ ແລະ ບ້ານປ້ອງກັນຊາດເຂັ້ມແຂງ; ວຽກງານກຽມພ້ອມສູ້ຮົບ ແລະ ກອບກູ້ໄພພິບັດ: ຈັດຕັ້ງກໍາລັງປະຈໍາການກຽມພ້ອມສູ້ຮົບຕະຫຼອດ 24 ຊົ່ວໂມງ, ຈັດຕັ້ງປ້ອງກັນການນໍາພັກ-ລັດ, ປ້ອງກັນກອງປະຊຸມພາຍໃນ ແລະ ສາກົນ, ປ້ອງກັນວັນສໍາຄັນຂອງຊາດຂອງພັກ, ປ້ອງກັນຈຸດສໍາຄັນ ເສັ້ນທາງຄົມມະນາຄົມ, ປ້ອງກັນບຸນປະ ເພນີຕ່າງໆ; ເອົາໃຈໃສ່ປ້ອງກັນຊາຍແດນແຕ່ເມືອງສັງທອງຫາເມືອງປາກງື່ມ ມີຄວາມຍາວ 187 ກມ, ປ້ອງກັນແລວຂຶ້ນ-ລົງຂອງຍົນ, ປ້ອງກັນເສັ້ນທາງລົດໄຟລາວ-ຈີນ ຂອບເຂດນະຄອນຫຼວງວຽງຈັນຮັບຜິດຊອບ ໃຫ້ມີຄວາມສະຫງົບປອດໄພ; ເຂົ້າຮ່ວມການເຝິກອົບຮົມ-ຫັດແອບວຽກງານກອບກູ້ໄພພິບັດທີ່ກະຊວງປ້ອງກັນປະເທດຈັດຂຶ້ນ 01 ຄັ້ງ; ຊ່ວຍເຫຼືອປະຊາຊົນທີ່ຖືກຜົນກະທົບຈາກໄພທໍາມະຊາດນໍ້າຖ້ວມ, ໄຟໄໝ້, ພະຍຸພັດ ແລະ ອື່ນໆ ລວມ 94 ຄັ້ງ; ເອົາໃຈໃສ່ສຶກສາອົບຮົມການເມືອງ-ນໍາພາແນວຄິດໃຫ້ພະນັກງານ-ນັກຮົບຢ່າງເປັນປົກກະຕິ ແລະ ທົ່ວເຖິງທຸກເປົ້າໝາຍ ໂດຍເຊື່ອມຊຶມ-ກໍາແໜ້ນແນວທາງນະໂຍບາຍ, ມະຕິຕ່າງໆສະໄໝທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ຄັ້ງທີ VII ອົງຄະນະພັກນະຄອນຫຼວງວຽງຈັນ, ມະຕິກອງປະຊຸມໃຫຍ່ຄັ້ງທີ V ອົງຄະນະພັກກະຊວງປ້ອງກັນປະເທດ, ກົດໝາຍຂອງລັດ, ມະຕິຄໍາສັ່ງ ແລະ ຂໍ້ກໍານົດກົດລະບຽບຕ່າງໆ, ຮຽນມູນເຊື້ອຂອງຊາດຂອງພັກຂອງກອງທັບ ແລະ ໜ້າທີ່ການເມືອງຂອງກົມກອງ. ພ້ອມນີ້ ໄດ້ຈັດຕັ້ງສ້າງຂະບວນການຕ່າງໆເພື່ອຕ້ອນ ຮັບວັນສໍາຄັນຂອງຊາດ-ຂອງພັກ, ພິເສດແມ່ນວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 75 ປີ ແລະ ວັນສ້າງຕັ້ງກອງບັນຊາການທະຫານນະຄອນຫຼວງວຽງຈັນ ຄົບຮອບ 48 ປີ.

ທ່ານ ພັອ. ປະເສີດ ທ່ຽງທໍາ ເລຂາຄະນະພັກກອງບັນຊາການ, ຫົວໜ້າການທະຫານກອງພັນປືນໃຫຍ່ໜ້າ ດິນເອກະລາດ 605 ໄດ້ລາຍງານຫຍໍ້ກ່ຽວກັບການເຕີບໃຫຍ່ຂະຫຍາຍຕົວຂອງກອງພັນໃຫຍ່ດັ່ງກ່າວ ແລະ ຜົນງານການເຄື່ອນໄຫວເຮັດໜ້າທີ່ການເມືອງຂອງກົມກອງໃນໄລຍະຜ່ານມາ ເຊິ່ງທ່ານໃຫ້ຮູ້ວ່າ: ກອງພັນປືນໃຫຍ່ໜ້າດິນ605 ແມ່ນມີມູນເຊື້ອສືບທອດມາຈາກກອງພັນປືນໃຫຍ່ໜ້າດິນໝາຍເລກ 605 ເຊິ່ງເປັນກົມກອງທໍາອິດຂອງເຫຼົ່າຮົບປືນໃຫຍ່ໜ້າດິນກອງທັບປົດປ່ອຍປະຊາຊົນລາວໃນເມື່ອກ່ອນ ແລະ ກອງທັບປະຊາຊົນລາວໃນປັດຈຸບັນ, ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 15 ທັນວາ 1954 ຢູ່ຖານທີ່ໝັ້ນແຂວງຫົວພັນ ເຊິ່ງແມ່ນສະຫາຍ ພົມມາ ດວງມາ ລາ ເປັນຫົວໜ້າການທະຫານ ແລະສະຫາຍ ສີພອນ ຜາລີຂັນ ເປັນຫົວໜ້າການເມືອງ; ການຈັດຕັ້ງເບື້ອງຕົ້ນປະກອບມີ 7 ກອງຮ້ອຍ ໃນນັ້ນ 3 ກອງຮ້ອຍປະກອບອາວຸດປືນໃຫຍ່ແບກຫາບ ແລະ 4 ກອງຮ້ອຍ ຮັບໜ້າທີ່ເປັນກອງລໍາລຽງຂົນສົ່ງອາວຸດ-ກະສູນໃຫ້ສະໜາມຮົບໃນແຕ່ລະທິດ. ພາຍຫຼັງໄດ້ຮັບການສ້າງຕັ້ງກົມກອງໄດ້ເຂົ້າຮ່ວມເປັນກໍາລັງໄຟຊ່ວຍໜູນຕົ້ນຕໍຂອງຫຼາຍບັ້ນຮົບ, ບັ້ນຕີສໍາຄັນທີ່ມີຄວາມໝາຍຕັດສິນທາງດ້ານຍຸດທະວິທີ, ຍຸດທະບັ້ນຮົບ ແລະ ຍຸດທະສາດ; ໃນໄລຍະປະຕິວັດພາລະກິດຕໍ່ສູ້ປົດປ່ອຍຊາດ, ກົມກອງ ທັງເຮັດໜ້າທີ່ສູ້ຮົບທັງປັບປຸງກໍ່ສ້າງກໍາລັງທາງດ້ານການຈັດຕັ້ງ ແລະ ການປະກອບພາຫະນະ-ອາວຸດ ຈາກອາວຸດປືນໃຫຍ່ແບກຫາບ ກ້າວໄປເຖິງການປະກອບອາວຸດປືນໃຫຍ່ໜ້າດິນທີ່ທັນສະໄໝເປັນກ້າວໆມາ ສາມາດເຮັດສໍາເລັດໜ້າທີ່ການເມືອງຂອງຕົນ ແລະ ຍາດໄດ້ຜົນງານ, ໄຊຊະນະອັນໃຫຍ່ຫຼວງ ປະກອບສ່ວນເຂົ້າໃນໄຊຊະນະລວມຂອງຊາດ. ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການເຮັດສໍາເລັດໜ້າທີ່ການເມືອງໃນໄລຍະໃໝ່, ກະຊວງປ້ອງກັນປະເທດ ໄດ້ຕົກລົງປະກາດສ້າງຕັ້ງກອງພັນໃຫຍ່ປືນໃຫຍ່ໜ້າດິນ 605 ເອກະລາດ ຂຶ້ນຢ່າງເປັນທາງການໃນວັນທີ 26 ສິງຫາ 1985; ຕະຫຼອດໄລຍະ 69 ປີ (1954-2023) ແຫ່ງການກໍາເນີດ ແລະ ເຕີບໃຫຍ່ຂອງກົມກອງສາມາດຍາດໄດ້ຜົນງານ ແລະ ໄຊຊະນະອັນໃຫຍ່ຫຼວງປະກອບສ່ວນໃນຜົນສໍາເລັດ ແລະ ໄຊຊະນະລວມຂອງຊາດ. ທ່ານ ພັອ. ປະເສີດ ທ່ຽງທໍາ ໃຫ້ຮູ້ອີກວ່າ: ປັດຈຸບັນພວມເຄື່ອນໄຫວຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ V ຂອງຄະນະພັກກະຊວງປ້ອງກັນປະເທດວ່າດ້ວຍ 4 ໜ້າທີ່ໃຫຍ່, 26 ແຜນງານ ກໍຄືມະຕິກອງປະຊຸມໃຫຍ່ຄັ້ງທີ V ຂອງຄະນະພັກກອງພັນໃຫຍ່ວາງອອກໃຫ້ເປັນຮູບປະທໍາຄື: ໜ້າທີ່ເຮັດໃຫ້ສະພາບມີຄວາມສະຫງົບ, ໜ້າທີ່ປັບປຸງກໍ່ສ້າງກໍາລັງ, ໜ້າທີ່ວຽກງານພາລາທິການ ແລະ ເຕັກນິກ, ໜ້າທີ່ພົວພັນຮ່ວມມືກັບສາກົນ.

ທ່ານ ພັອ. ພູໂຂງ ມະໂນລາ ເລຂາຄະນະພັກກອງບັນຊາການ, ຫົວໜ້າກອງພັນໃຫຍ່ທະຫານຮາບ 941 ໄດ້ລາຍງານຫຍໍ້ກ່ຽວກັບການເຕີບໃຫຍ່ຂະຫຍາຍຕົວຂອງກອງພັນໃຫຍ່ດັ່ງກ່າວ ແລະ ຜົນງານການເຄື່ອນໄຫວເຮັດໜ້າທີ່ການເມືອງຂອງກົມກອງໃນໄລຍະຜ່ານມາ ເຊິ່ງທ່ານໃຫ້ຮູ້ວ່າ: ກອງພັນໃຫຍ່ທະຫານຮາບ 941 ເປັນກອງພັນ ໃຫຍ່ເອກະລາດ ຂຶ້ນກັບກະຊວງປ້ອງກັນປະເທດໂດຍກົງຮອບດ້ານ, ມີໜ້າທີ່ຮັກສາເຂດຍຸດທະສາດແນວຫຼັງນະຄອນຫຼວງ; ປັດຈຸບັນປະກອບມີ 05 ພະແນກການ, 03 ກອງພັນນ້ອຍຂຶ້ນກັບ, ມີ 12 ກອງຮ້ອຍ, ສໍານັກງານກອງພັນໃຫຍ່ທະຫານຮາບ 941 ຕັ້ງຢູ່ບ້ານໜອງຍາວ ເມືອງນາຊາຍທອງ; ກອງພັນນ້ອຍທະຫານຮາບ 901 ຕັ້ງຢູ່ເຂດ ເມືອງທຸລະຄົມ ແຂວງວຽງຈັນ, ກອງພັນນ້ອຍທະຫານຮາບ 902 ຕັ້ງຢູ່ເຂດເມືອງທ່າພະບາດ ແຂວງບໍລິຄໍາໄຊ ສອງກອງພັນນ້ອຍດັ່ງກ່າວ ແມ່ນມີໜ້າທີ່ຮັບຜິດຊອບເຂດຍຸດທະສາດພູເຂົາຄວາຍ, ມີພື້ນທີ່ຕິດກັບ 04 ແຂວງ 07 ຕົວເມືອງ; ກອງພັນນ້ອຍທະຫານຮາບ 903 ຕັ້ງຢູ່ເຂດເມືອງໂພນໂຮງ ແຂວງວຽງຈັນ ມີໜ້າທີ່ຮັບຜິດຊອບປ່າເຂດ ຍຸດທະສາດພູພະນັງ, ມີພື້ນທີ່ຕິດກັບ 02 ແຂວງ 05 ເມືອງ. ການຈັດຕັ້ງປະຕິບັດວຽກງານຕົວຈິງໃນປີ 2023 ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງນໍາພາແນວຄິດໃຫ້ພະນັກງານ-ນັກຮົບ ຮັບຮູ້ເຊື່ອມຊຶມແນວທາງນະໂຍບາຍ ຂອງພັກ-ລັດ, ມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ຄັ້ງທີ V ຂອງອົງຄະນະພັກກະຊວງປ້ອງກັນປະເທດ ວ່າດ້ວຍ 04 ໜ້າທີ່ໃຫຍ່ 26 ແຜນງານ ແລະ 05 ບາດກ້າວບຸກທະລຸ, ຊຸກຍູ້ສ້າງກອງ 03 ປອດ, ກົມກອງວັດທະນະທໍາ, ນັກຮົບວັດທະນະທໍາ ຕິດພັນກັບຂະບວນການກໍ່ສ້າງພັກປອດໃສ ເຂັ້ມແຂງໜັກແໜ້ນ, ຜັນຂະຫຍາຍມະຕິ V ຂອງອົງຄະນະພັກກອງພັນໃຫຍ່ທະຫານຮາບ 941 ວາງອອກຢ່າງຕັ້ງໜ້າ. ຄະນະພັກ-ຄະນະບັນຊາແຕ່ລະຂັ້ນໄດ້ເອົາໃຈໃສ່ຊຸກຍູ້ ແລະ ຮ່ວມກັບທຸກພາກສ່ວນ ລົງເກັບກໍາຂໍ້ມູນນໍາອໍານາດການປົກຄອງທ້ອງຖິ່ນແຕ່ລະຂັ້ນຢູ່ບັນດາເມືອງ, ແຂວງທີ່ຕິດຈອດກັບເຂດຮັບຜິດຊອບຂອງກົມກອງໂດຍ ຈັດຕັ້ງເຜີຍແຜ່ເອກະສານເຊັ່ນ: ກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍສັດນໍ້າ-ສັດປ່າ, ບັນດາຄໍາສັ່ງແນະນໍາ, ແຈ້ງການ, ຂໍ້ກໍານົດ, ກົດລະບຽບຕ່າງໆ ຢູ່ 03 ກອງພັນນ້ອຍ ແລະ ບັນດາໝູ່ບ້ານທີ່ຢູ່ໃນ ແລະ ອ້ອມຂ້າງປ່າສະຫງວນແຫ່ງຊາດ, ມີປະຊາຊົນເຂົ້າຮ່ວມ 1.559 ຄົນ ຍິງ 678 ຄົນ; ລົງຊີ້ນໍາບັນດາກົມກອງຂຶ້ນກັບ ແລະ ພົວພັນ ວຽກນໍາກົມກ່ຽວຂ້ອງໄດ້ເປັນປົກກະຕິ, ພ້ອມກັນນັ້ນ ໄດ້ເຂົ້າຮ່ວມການສ່ອງແສງນໍາບັນດາກຸ່ມບ້ານ, ເມືອງ ທີ່ມີ ເຂດແດນຕິດຈອດກັບກົມກອງໄດ້ຢ່າງຕໍ່ເນື່ອງ.

ຈາກນັ້ນ, ທ່ານ ບຸນທາມ ພຸດທະວົງ ໄດ້ຂຶ້ນເຜີຍແຜ່ຜົນສໍາເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ II ເຊິ່ງໄດ້ຍົກໃຫ້ເຫັນເນື້ອໃນຜົນສໍາເລັດຂອງກອງປະຊຸມໃນ ການຕົກລົງບັນຫາສໍາຄັນຕ່າງໆພາຍໃນນະຄອນຫຼວງວຽງຈັນ.

ໃນໂອກາດນີ້, ທ່ານ ພົທ. ສຸວອນ ເລືອງບຸນມີ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນງານການເຄື່ອນໄຫວຂອງກອງບັນຊາການທະຫານນະຄອນຫຼວງວຽງຈັນ ແລະ ກອງພັນປືນໃຫຍ່ໜ້າດິນເອກະລາດ 605 ທີ່ສາມາດຍາດມາໄດ້ໃນໄລຍະຜ່ານມາ ທັງມີຄໍາເຫັນໂອ້ລົມຕໍ່ພະນັກງານຫຼັກແຫຼ່ງສອງກົມກອງ ເຊິ່ງໄດ້ເນັ້ນໜັກຫຼາຍບັນຫາທີ່ສໍາຄັນ ໂດຍສະເພາະແມ່ນການຮັກສາມູນເຊື້ອອັນດີງາມ ແລະ ສືບຕໍ່ນໍາພາ-ຊີ້ນໍາພະນັກງານ, ນາຍ ແລະ ພົນທະຫານ ສ້າງຜົນງານນັບມື້ດີຂຶ້ນເລື້ອຍໆ; ປະຕິບັດໜ້າທີ່ວຽກງານວິຊາສະເພາະທີ່ພັກ-ລັດມອບໝາຍໃຫ້ດ້ວຍຄວາມຮັບຜິດຊອບສູງ ແລະ ອື່ນໆ. ພ້ອມດຽວກັນນີ້, ທ່ານຍັງໄດ້ຍົກໃຫ້ເຫັນຜົນສໍາເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ IX, ເປີດໂອກາດໃຫ້ຜູ້ເຂົ້າຮ່ວມ ແລະ ສະມາຊິກສະພາແຫ່ງຊາດໄດ້ຖາມ-ຕອບຂໍ້ຂ້ອງໃຈ ແລະ ຂໍ້ສະເໜີຕ່າງໆຢ່າງກົງໄປກົງມາອີກດ້ວຍ.

**(ນາງ ໄຊໂສພາພອນ ມົ່ງມຸງຄຸນ)**



## ສນສ...

(ຕໍ່ຈາກໜ້າ 1)

ການປີ 2024 ໃຫ້ມີເນື້ອໃນຄົບຖ້ວນ; ນອກຈາກນີ້, ກອງປະຊຸມຍັງໄດ້ຮັບຟັງການປະກອບຄໍາເຫັນກ່ຽວກັບການຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຈາກທ່ານຮອງປະທານກໍາມາທິການວຽກງານສະມາຊິກສະພາແຫ່ງຊາດ ແລະ ທ່ານເລຂາທິການສະພາປະຊາຊົນນະຄອນຫຼວງວຽງຈັນ.

ໃນຕອນທ້າຍກອງປະຊຸມ ຍັງໄດ້ຮັບຟັງການໂອ້ລົມຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ຜູ້ຊີ້ນໍາສະຖາບັນຄົ້ນຄວ້ານິຕິກໍາ ເຊິ່ງທ່ານໄດ້ເນັ້ນໜັກໃຫ້ເອົາໃຈໃສ່ຄົ້ນຄວ້າຫົວຂໍ້ວິທະຍາສາດກ່ຽວກັບທິດສະດີ ແລະ ພຶດຕິກໍາວຽກງານສະພາ ທັງຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອຮັບໃຊ້ໃຫ້ແກ່ການຈັດຕັ້ງປະຕິບັດ 3 ພາລະບົດບາດຂອງສະພາແຫ່ງຊາດ, ຄົ້ນຄວ້າ ແລະ ວິເຄາະກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ດ້ວຍການປຽບທຽບ ແລະ ຄັດຫຍໍ້ເນື້ອໃນບັນຫາຕ່າງໆ ເພື່ອເປັນຂໍ້ມູນສະໜອງໃຫ້ແກ່ຄະນະປະຈໍາສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ແລະ ບັນດາກໍາມາທິການທີ່ກ່ຽວຂ້ອງ ຕາມທີ່ໄດ້ວາງໄວ້; ເອົາໃຈໃສ່ປະສານສົມທົບກັບບັນດາກໍາມາທິການ ແລະ ພາກສ່ວນກ່ຽວຂ້ອງໃນການຄົ້ນຄວ້າເນື້ອໃນ, ຮູບການ ແລະ ວິທີການໃນການເຝິກອົບຮົມ ແລະ ສໍາມະນາ ໂດຍໃຫ້ເອົາໃຈໃສ່ຄົ້ນຄວ້າ ແລະ ສ້າງຫຼັກສູດ, ທັກສະ ແລະ ປຶ້ມຄູ່ມືຕ່າງໆທີ່ມີຄວາມສໍາຄັນ ແລະ ເປັນບົດຮຽນທີ່ດີ ເພື່ອຍົກສູງຂີດຄວາມສາມາດປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານທີ່ເປັນເສນາທິການ ໃຫ້ສາມາດໝູນໃຊ້ເຂົ້າໃນການປະຕິບັດວຽກງານຕົວຈິງໃຫ້ມີປະສິດທິຜົນ ແລະ ສືບຕໍ່ພົວພັນກັບສະຖາບັນຄົ້ນຄວ້າທີ່ກ່ຽວຂ້ອງ ທັງຢູ່ພາຍໃນ ແລະ ຕ່າງປະເທດ, ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ເພື່ອແລກປ່ຽນຂໍ້ມູນຂ່າວສານ, ບົດຮຽນທີ່ດີ, ຍາດແຍ່ງເຕັກນິກວິຊາການ ແລະ ທຶນຮອນ ເພື່ອສະໜັບສະໜູນແຜນພັດທະນາວຽກງານຂອງສະຖາບັນ ໃຫ້ເຕີບໃຫຍ່ຂະຫຍາຍຕົວ, ປະກອບສ່ວນເຂົ້າໃນການພັດທະນາວຽກງານຂອງສະພາແຫ່ງຊາດ ໃຫ້ມີຜົນສໍາເລັດດີຂຶ້ນຢ່າງບໍ່ຢຸດຢັ້ງ.

**(ນາງ ກຸກກິກ ບຸດດາໄຊ)**

# ຄະນະຜູ້ແທນສະພາປະຊາຊົນແຂວງກວາງນາມ ຢ້ຽມຢາມ ແລະ ຮຽນຮູ້ວຽກງານຢູ່ແຂວງຈຳປາສັກ



(ສພຊ) ສະຫາຍ ສາຍທອງ ໄຊຍະວົງ ຮອງເລຂາຄະນະບໍລິຫານງານພັກແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 15 ທັງເປັນປະທານສະພາປະຊາຊົນແຂວງຈຳປາສັກ ພ້ອມດ້ວຍຄະນະ ໄດ້ຕອນຮັບການມາເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຂອງຄະນະຜູ້ແທນສະພາປະຊາຊົນແຂວງກວາງນາມ ສສ ຫວຽດນາມ ນຳໂດຍສະຫາຍ ຫງວຽນ ກົງ ແທງ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງກວາງນາມ ພ້ອມດ້ວຍຄະນະ ໃນຕອນບ່າຍ ວັນທີ 13 ທັນວາ 2023 ທີ່ສະພາປະຊາຊົນແຂວງຈຳປາສັກ ທີ່ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງຈຳປາສັກ.

ໃນກອງປະຊຸມພົບປະ ແລະ ເຮັດວຽກຮ່ວມກັນ, ສະຫາຍ ສາຍທອງ ໄຊຍະວົງ ໄດ້ກ່າວສະແດງຄວາມຕ້ອນຮັບຄະນະຜູ້ແທນສະພາປະຊາຊົນແຂວງກວາງນາມ ສສ ຫວຽດນາມ ຢ່າງອົບອຸ່ນ ແລະ ໄດ້ລາຍງານສະພາບລວມການຈັດຕັ້ງປະຕິບັດວຽກງານຂອງແຂວງ ກໍຄືການຈັດຕັ້ງປະຕິບັດວຽກງານຂອງສະພາປະຊາຊົນແຂວງຈຳປາສັກ ໂດຍຫຍໍ້, ພ້ອມທັງຕີລາຄາສູງຕໍ່ການມາຢ້ຽມຢາມ ແລະ ເຮັດວຽກຂອງຄະນະຜູ້ແທນສະພາປະຊາຊົນແຂວງກວາງນາມ ໃນຄັ້ງນີ້ວ່າ: ເປັນການປະກອບສ່ວນອັນສຳຄັນເຂົ້າໃນການເສີມສ້າງມູນເຊື້ອອັນດີງາມ ແຫ່ງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ, ຫວຽດນາມ-ລາວ ອ້າຍນ້ອງ ກໍຄືສະພາປະຊາຊົນສອງແຂວງພວກເຮົາທີ່ມີມາແຕ່ດົນນານແລ້ວ ໃຫ້ມີຄວາມແໜ້ນແຟ້ນ ຈະເລີນງອກງາມ ແລະ ເກີດດອກອອກຜົນຍິ່ງໆຂຶ້ນ.

ຈາກນັ້ນ, ສະຫາຍ ຫງວຽນ ກົງ ແທງ ໄດ້ກ່າວສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ອຳນວຍຄວາມສະດວກດ້ານຕ່າງໆຕໍ່ການມາຢ້ຽມຢາມແຂວງຈຳປາສັກໃນຄັ້ງນີ້ ພ້ອມທັງໄດ້ລາຍງານສະພາບລວມ ແລະ ການຈັດຕັ້ງປະຕິບັດວຽກງານຂອງແຂວງກວາງນາມ ໂດຍສະເພາະການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງໂດຍຫຍໍ້.

ການມາຢ້ຽມຢາມແລະເຮັດວຽກຄັ້ງນີ້, ໃນພິທີພົບປະສະພາປະຊາຊົນແຂວງ ທັງ 2 ຝ່າຍໄດ້ສົນທະນາແລກປ່ຽນບົດຮຽນ ແລະ ເຫັນດີເປັນເອກະພາບກັນໃນການເພີ່ມທະວີການຈັດຕັ້ງປະຕິບັດວຽກງານການເສີມສ້າງມູນເຊື້ອອັນດີງາມແຫ່ງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ, ຫວຽດນາມ-ລາວ ອ້າຍນ້ອງ. ເສີມສ້າງຜັນຂະຫຍາຍສາຍພົວພັນການຮ່ວມມືດັ່ງກ່າວ ເຂົ້າສູ່ລວງເລິກໃນການໃຫ້ການຊ່ວຍເຫຼືອເຊິ່ງກັນແລະກັນ ລະຫວ່າງສະພາປະຊາຊົນແຂວງຈຳປາສັກສປປລາວ ກັບສະພາປະຊາຊົນແຂວງກວາງນາມ ສສ ຫວຽດນາມ ໃຫ້ໄດ້ມີການເຊັນບົດບັນທຶກຮ່ວມມືກັນໃນຕໍ່ໜ້າ.

**(ສົມວິຈິດ ໄຊມົນຕີ)**

# ຝຶກອົບຮົມການສ້າງນິຕິກຳ ໃຕ້ກົດໝາຍ ໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ

(ສພຊ) ເພື່ອສຸມໃສ່ການກະກຽມວຽກງານຮອບດ້ານ ໃຫ້ແກ່ການດຳເນີນກອງປະຊຸມຄົບຄະນະຂອງຄະນະກຳມະການ, ກອງປະຊຸມຄົບຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ແລະ ກອງປະຊຸມສະໄໝສາມັນເທື່ອທີ6ຂອງສະພາປະຊາຊົນແຂວງ ຊຸດທີ II ໃນລະຫວ່າງວັນທີ 14-15 ທັນວາ 2023 ສະພາປະຊາຊົນແຂວງໄດ້ຈັດກອງປະຊຸມຝຶກອົບຮົມກ່ຽວກັບການສ້າງນິຕິກຳໃຕ້ກົດໝາຍໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ, ບັນດາພະແນກການ, ອົງການທຽບເທົ່າພະແນກການຂັ້ນແຂວງ ແລະ ພະນັກງານ-ລັດຖະກອນ ຊ່ວຍວຽກພາຍໃນສະພາປະຊາຊົນແຂວງ ທີ່ຫ້ອງປະຊຸມຫ້ອງວ່າການແຂວງຊັ້ນ 4 ໂດຍການເປັນປະທານຂອງທ່ານ ຄຳຜັນ ຄູນສະຫວັນ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ, ມີບັນດາທ່ານປະທານໃນຄະນະປະຈຳສະພາປະຊາຊົນແຂວງ; ນອກນີ້, ຍັງມີບັນດາຮອງປະທານຄະນະກຳມະການ, ຄະນະເລຂາທິການ, ຕາງໜ້າບັນດາພະແນກການ, ອົງການທຽບເທົ່າພະແນກຂັ້ນແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມທັງໝົດ 66 ທ່ານ ຍິງ 25 ທ່ານ.

ນິຕິກຳໃຕ້ກົດໝາຍແມ່ນເອກະສານທາງດ້ານກົດໝາຍ ທີ່ດັດປັບສາຍພົວພັນສັງຄົມ, ມີຜົນບັງຄັບໃຊ້ທົ່ວໄປ ຫຼື ມີຜົນບັງຄັບສະເພາະ ຖືກສ້າງຂຶ້ນຮັບຮອງ ແລະ ປະກາດໃຊ້ໂດຍອົງການທີ່ມີສິດອຳນາດ ອົງການທີ່ມີສິດອຳນາດຂອງລັດຂັ້ນສູນກາງ ແລະ ທ້ອງຖິ່ນ, ສຳລັບສະພາປະຊາຊົນແຂວງ ຊຸດທີ II ໄດ້ຮັບຮອງເອົາຄາດໝາຍການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ຈຳນວນ 16 ສະບັບ ໃນນັ້ນສ້າງໃໝ່ 13 ສະບັບ ແລະ ປັບປຸງ 3 ສະບັບ, ສຳລັບຜ່ານການຈັດຕັ້ງປະຕິບັດມາຮອດປັດຈຸບັນ ສາມາດຮັບຮອງໄດ້ 2 ສະບັບ. ການຝຶກອົບຮົມໃນຄັ້ງນີ້ ວິທະຍາກອນນຳໂດຍທ່ານ ພົນໂນລາ ທອງຈັນ ຮອງຫົວໜ້າກົມກົດໝາຍ ກະຊວງຍຸຕິທຳ, ທ່ານ ຄຳນ້ອຍ ແກ້ວບົວຄຳ ຮອງຫົວໜ້າພະແນກກົດໝາຍປົກຄອງ, ວັດທະນະທຳ-ສັງຄົມ ກະຊວງຍຸຕິທຳ ພ້ອມດ້ວຍຄະນະ ເຊິ່ງໄດ້ລົງເລິກບັນຫາຄື: ບົດຮຽນກ່ຽວກັບຂັ້ນຕອນ ແລະ ລະບຽບການສ້າງນິຕິກຳຂັ້ນທ້ອງຖິ່ນ; ບົດຮຽນກ່ຽວກັບການສ້າງຂໍ້ຕົກລົງ, ຄຳສັ່ງ ແລະ ຄຳແນະນຳຂອງທ່ານເຈົ້າແຂວງ; ບົດຮຽນກ່ຽວກັບຄວາມຮູ້ທົ່ວໄປໃນການປະເມີນຜົນກະທົບຂອງຮ່າງນິຕິກຳ, ບົດຮຽນກ່ຽວກັບຂັ້ນຕອນການຮ່າງ ແລະ ກວດກາບົດປະເມີນຜົນກະທົບຂອງຮ່າງນິຕິກຳ; ຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ການສ້າງຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງ ໂດຍສະເພາະແມ່ນນິຕິກຳທີ່ນຳເຂົ້າພິຈາລະນາ ໃນກອງປະຊຸມສະໄໝສາມັນເທື່ອ 6 ຂອງສະພາປະຊາຊົນແຂວງ ຊຸດທີ II.




ຈາກນັ້ນ, ຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ ກໍໄດ້ເອົາໃຈໃສ່ຄົ້ນຄວ້າປຶກສາຫາລື, ສົນທະນາກັນຢ່າງກົງໄປກົງມາແລະເລິກເຊິ່ງ ກ່ຽວກັບຄວາມເຂົ້າໃຈຕໍ່ກັບວິທີການ, ຂັ້ນຕອນ, ບາດກ້າວຂອງການສ້າງນິຕິກຳໃຕ້ກົດໝາຍ, ເພື່ອໃຫ້ມີຄວາມເປັນເອກະພາບ, ຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ສະພາບຕົວຈິງໃນສັງຄົມ ແນໃສ່ເຮັດໃຫ້ບັນດາພະແນກການ, ອົງການແທບເທົ່າພະແນກການແຂວງ ກໍຄືອົງການປົກຄອງແຂວງ ມີເຄື່ອງມືຄົບຊຸດໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ແລະ ການບໍລິການປະຊາຊົນໃຫ້ດີຂຶ້ນ ພ້ອມທັງເຮັດໃຫ້ແຜນການຈັດຝຶກອົບຮົມ ໄດ້ຮັບຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້.

**(ວັນນະສຸກ ອິນສີຊຽງໃໝ່)**

# ກອງປະຊຸມຮ່ວມລະຫວ່າງສະພາປະຊາຊົນແຂວງກັບແນວລາວສ້າງຊາດ



(ສພຊ) ກອງປະຊຸມຮ່ວມລະຫວ່າງສະພາປະຊາຊົນແຂວງ ກັບແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນແຂວງສາລະວັນ ໃນຕອນບ່າຍວັນທີ 14 ທັນວາ 2023 ທີ່ຫ້ອງປະຊຸມຂອງສະໂມສອນແຂວງສາລະວັນ ໂດຍການເປັນປະທານຮ່ວມຂອງທ່ານ ສີເຮັງ ທອມສົມບັດ ປະທານສະພາປະຊາຊົນແຂວງ, ທ່ານ ຄຳຕາ ໂຮ່ຊົງເລືອງ ຄະນະປະຈຳພັກແຂວງ, ກຳມະການສູນກາງແນວລາວສ້າງຊາດ, ປະທານອົງການແນວລາວສ້າງຊາດແຂວງ ຜູ້ຊີ້ນຳວຽກງານອົງການຈັດຕັ້ງມະຫາຊົນ; ເຂົ້າຮ່ວມມີຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ,ອົງການຈັດຕັ້ງມະຫາຊົນ ແລະ ຂະແໜງການທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນທີ່ປະຊຸມ, ທ່ານ ນາງ ສູນໄຖ ໄຊຍະແສງ ຮອງປະທານສະພາປະຊາຊົນແຂວງ ໄດ້ລາຍງານການເຄື່ອນໄຫວວຽກງານການຈັດຕັ້ງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາປະຊາຊົນແຂວງ ໃນໄລຍະກາງສະໄໝ (2021-2023) ແລະ ທິດທາງແຜນການວຽກງານທ້າຍສະໄໝ (2023-2025); ຈາກນັ້ນ, ຮັບຟັງການຜ່ານຮ່າງມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍກົນໄກປະສານງານລະຫວ່າງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງສາລະວັນ ກັບແນວລາວສ້າງຊາດແຂວງ ແລະ ອົງການຈັດຕັ້ງມະຫາຊົນແຂວງສາລະວັນ ລວມມີ 24 ມາດຕາ ເຊິ່ງໄດ້ມີການກຳນົດຫຼັກການ, ເນື້ອໃນ, ຂອບເຂດ ແລະ ວິທີການປະສານງານລະຫວ່າງສະພາປະຊາຊົນແຂວງ ກັບແນວລາວສ້າງຊາດແຂວງ ທັງນີ້ເພື່ອແນໃສ່ຊຸກຍູ້ໃຫ້ມີຄວາມກົມກຽວ ແລະ ວ່ອງໄວ ທັງຍົກສູງປະສິດທິພາບ ແລະ ປະສິດທິຜົນ ໃນການຈັດຕັ້ງພາລະບົດບາດ, ສິດ ແລະ ໜ້າທີ່ຂອງແຕ່ລະພາກສ່ວນ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ; ຈາກນັ້ນ, ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນໃສ່ຮ່າງມະຕິດັ່ງກ່າວ ແນໃສ່ໃຫ້ມີເນື້ອໃນຖືກຕ້ອງ ແລະ ຄົບຖ້ວນ. ນອກນັ້ນ, ໃນທີ່ປະຊຸມຍັງໄດ້ແລກປ່ຽນ ແລະ ປະກອບຄຳເຫັນລົງເລິກໃສ່ບາງບັນຫາທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບຕາມພາລະບົດບາດຂອງສະພາປະຊາຊົນແຂວງ, ອົງການ

ອ່ານຕໍ່ໜ້າ 7

# ກອງປະຊຸມຄົບຄະນະ 3 ຄະນະກຳມະການ ແລະ ກອງປະຊຸມຄະນະເລຂາທິການ ປະຈຳປີ 2023



(ສພຊ) ໃນວັນທີ 25 ທັນວາ 2023 ທີ່ຫ້ອງປະຊຸມໃຫຍ່ຂອງສະພາປະຊາຊົນແຂວງຜົ້ງສາລີ ໄດ້ຈັດກອງປະຊຸມຄົບຄະນະ ປະຈຳປີ 2023 ຂອງ 3 ຄະນະກຳມະການ ແລະ ກອງປະຊຸມປະຈຳປີ 2023 ຂອງຄະນະເລຂາທິການສະພາປະຊາຊົນແຂວງ ພາຍໃຕ້ການເປັນປະທານຂອງທ່ານ ທອງສີ ເສົາສຸລິພົມ ປະທານຄະນະປະຈຳສະພາປະຊາຊົນແຂວງ, ມີບັນດາທ່ານຮອງປະທານຄະນະປະຈຳສະພາປະຊາຊົນແຂວງ, ບັນດາທ່ານກຳມະການປະຈຳສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການ, ຮອງເລຂາທິການສະພາປະຊາຊົນແຂວງ, ມີບັນດາທ່ານສະມາຊິກສະພາປະຊາຊົນແຂວງ ປະຈຳເມືອງ, ວິຊາການຜູ້ຮັບຜິດຊອບວຽກງານຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເມືອງ ແລະ ພະນັກງານ-ລັດຖະກອນ ພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ຄຳມາ ສຸລິວົງ ຮອງເລຂາທິການສະພາປະຊາຊົນແຂວງ ໄດ້ສະເໜີຈຸດປະສົງຂອງກອງປະຊຸມ ແລະ ປະທານກອງປະຊຸມກໍໄດ້ກ່າວເປີດກອງປະຊຸມຢ່າງເປັນທາງການ. ຈາກນັ້ນ, ທ່ານ ຄຳດາ ໂສລະພົມ ປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ, ທ່ານ ນາງ ຈັນມະນີ ດວງພາສຸກ ປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ, ທ່ານ ສົມຈິດ ລາວຈຸງ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ແລະ ທ່ານ ນາງ ພອນສະຫວັນ ສັກຕິຄຸນ ເລຂາທິການສະພາປະຊາຊົນແຂວງ ໄດ້ຂຶ້ນຜ່ານຮ່າງບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ແຜນການເຄື່ອນໄຫວວຽກງານປະຈຳປີ 2024 ຂອງບັນດາຄະນະກຳມະການ ແລະ ຄະນະເລຂາທິການສະພາປະຊາຊົນແຂວງຕາມລຳດັບ; ຮັບຟັງທ່ານ ຄຳພັນ ຄູນສົມບັດ ຮອງປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ຂຶ້ນຜ່ານຮ່າງມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ (ສະບັບປັບປຸງ); ຫຼັງຈາກນັ້ນ, ປະທານກອງປະຊຸມກໍໄດ້ມີຄຳເຫັນເຈາະຈີ້ມ ຕໍ່ກັບບັນດາເນື້ອໃນບົດລາຍງານຂອງແຕ່ລະຄະນະກຳມະການ ແລະ ຄະນະເລຂາທິການສະພາປະຊາຊົນແຂວງ ເພື່ອເປັນທິດໃຫ້ແກ່ການປະກອບຄຳເຫັນ ແລະ ບັນດາຜູ້ແທນກອງປະຊຸມ (ສະມາຊິກສະພາປະຊາຊົນແຂວງ) ກໍໄດ້ປະກອບຄຳຄິດຄຳເຫັນຕໍ່ກັບເນື້ອໃນຢ່າງມີຄວາມຮັບຜິດຊອບສູງ ແລະ ເປັນຂະບວນຟົດຟື້ນ ເພື່ອເຮັດໃຫ້ເນື້ອໃນກອງປະຊຸມຄັ້ງນີ້ຄົບຖ້ວນ, ສົມບູນ ແລະ ຖືກຕ້ອງສອດຄ່ອງກັບພາລະບົດບາດ, ສິດ ແລະ ໜ້າທີ່ຕາມກົດໝາຍກຳນົດໄວ້, ຮັບປະກັນເຮັດໃຫ້ການຈັດຕັ້ງປະຕິບັດໜ້າທີ່ວຽກງານໄດ້ມີຜົນສຳເລັດ ແລະ ການຈັດຕັ້ງໄດ້ຮັບການປັບປຸງໃຫ້ເຂັ້ມແຂງໄປເທື່ອລະກ້າວ.

ໃນຕອນທ້າຍ, ປະທານກອງປະຊຸມ ຍັງໃຫ້ໄດ້ໂອ້ລົມຕໍ່ກອງປະຊຸມ ໂດຍທ່ານໄດ້ຍ້ອງຍໍຊົມເຊີຍຕໍ່ກອງປະຊຸມຄັ້ງນີ້ ທີ່ໄດ້ພ້ອມກັນສະຫຼຸບຕີລາຄາຜົນການຈັດຕັ້ງປະຕິບັດວຽກງານໃນໄລຍະ 1 ປີຜ່ານມາ ແລະ ທິດທາງແຜນການປະຈຳປີ 2024 ຂອງ 3 ຄະນະກຳມະການ ແລະ ຄະນະເລຂາທິການສະພາປະຊາຊົນແຂວງ ເຊິ່ງໄດ້ຍົກໃຫ້ເຫັນດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ, ບົດຮຽນທີ່ຖອດຖອນໄດ້ ເພື່ອເປັນບ່ອນອີງໃນການເຄື່ອນໄຫວຈັດຕັ້ງປະຕິບັດໜ້າທີ່ວຽກງານ, ສະແດງຄວາມຊົມເຊີຍຕໍ່ບັນດາທ່ານທີ່ໄດ້ປະກອບຄຳຄິດເຫັນຕໍ່ບົດລາຍງານຂອງ 3 ຄະນະກຳມະການ ແລະ ຄະນະເລຂາທິການສະພາປະຊາຊົນແຂວງ ດ້ວຍຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງທີ່ໄດ້ຮັບການມອບໝາຍ ໂດຍສະເພາະການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ໃນການເປັນເສນາທິການໃຫ້ຄະນະປະຈຳສະພາປະຊາຊົນແຂວງ ກໍຄືສະພາປະຊາຊົນແຂວງ; ນອກຈາກນັ້ນ, ທ່ານໄດ້ເນັ້ນ ແລະ ຮຽກຮ້ອງມາຍັງບັນດາຄະນະກຳມະການ ແລະ ຄະນະເລຂາທິການສະພາປະຊາຊົນແຂວງ ກໍຄືຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງທີ່ເປັນກຳມະການສັງກັດ ຕ້ອງສຸມໃສ່ຈັດຕັ້ງປະຕິບັດແຜນການວຽກງານຫຼາຍດ້ານໃນປີ 2024 ໃຫ້ປາກົດຜົນເປັນຈິງ, ຕ້ອງມີການປະສານສົມທົບຢ່າງກົມກຽວກັນ ໃນການສັງລວມ, ເກັບກຳຂໍ້ມູນ ແລະ ການສະຫຼຸບສ່ອງແສງລາຍງານເປັນປະຈຳ ທັງເປັນການເຊີດຊູບົດບາດຂອງຕົນເອງ ໂດຍສະເພາະການພົວພັນກັບພາກສ່ວນກ່ຽວຂ້ອງຂອງອົງການປົກຄອງແຂວງ ກໍຄືການປະສານງານພາຍໃນຄະນະກຳມະການ, ຄະນະເລຂາທິການສະພາປະຊາຊົນແຂວງ ແລະ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເມືອງ ເພື່ອພ້ອມກັນສູ້ຊົນຈັດຕັ້ງປະຕິບັດວຽກງານໃຫ້ປະສົບຜົນສຳເລັດຕາມຄາດໝາຍທີ່ກຳນົດໄວ້.

**(ສູນທອງ)**



# ຄະນະຜູ້ແທນ ສພຊ ອຸດົມໄຊ ສຳເລັດການຢ້ຽມຢາມ ແລະ ເຮັດວຽກຢູ່ ແຂວງດຽນບຽນ




(ສພຊ) ຄະນະຜູ້ແທນສະພາປະຊາຊົນແຂວງອຸດົມໄຊ ແຫ່ງ ສປປ ລາວ ສຳເລັດການຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງດຽນບຽນແຫ່ງ ສສ ຫວຽດນາມ ລະຫວ່າງວັນທີ 19-22 ທັນວາ 2023 ສະຫາຍ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ພົບປະແລກປ່ຽນບົດຮຽນວຽກງານສະພາປະຊາຊົນແຂວງ ເຊິ່ງຝ່າຍ ສສ ຫວຽດນາມ ນຳໂດຍ ສະຫາຍ ລໍ ວັນ ເຟືອງ ກຳມະການປະຈຳພັກແຂວງ, ປະທານສະພາປະຊາຊົນແຂວງດຽນບຽນ ແຫ່ງ ສສ ຫວຽດນາມ ພ້ອມດ້ວຍຄະນະ ໃນຕອນເຊົ້າຂອງວັນທີ 20 ທັນວາ 2023 ຄະນະຜູ້ແທນສະພາປະຊາຊົນແຂວງອຸດົມໄຊ ແຂວງຜົ້ງສາລີ ແລະ ແຂວງຫຼວງພະບາງ ແຫ່ງ ສປປ ລາວ ຮ່ວມກັບ ຄະນະຜູ້ແທນສະພາປະຊາຊົນແຂວງດຽນບຽນ ແຫ່ງ ສສ ຫວຽດນາມ ໄດ້ເຂົ້າຮ່ວມວາງພວງມາລາ ຢູ່ອານຸສາລະລີວິລະນາມໄຊຊະນະບັ້ນຮົບດຽນບຽນຟູ.

ການຢ້ຽມຢາມ ແລະ ເຮັດວຽກຄັ້ງນີ້, ກໍເພື່ອເປັນການຈັດຕັ້ງຜັນຂະຫຍາຍການຮ່ວມມື, ເພີ່ມທະວີການຮ່ວມມືສາຍພົວພັນພັນແບບພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງແຂວງອຸດົມໄຊ ກັບແຂວງດຽນບຽນເວົ້າລວມ ເວົ້າສະເພາະແມ່ນສອງອົງການນິຕິບັນຍັດຂັ້ນທ້ອງຖິ່ນຂອງສອງປະເທດ ລາວ-ຫວຽດນາມ, ເພື່ອຕອບສະໜອງການເຊື້ອເຊີນຂອງສະຫາຍ ລໍ ວັນ ເຟືອງ ປະທານສະພາປະຊາຊົນແຂວງດຽນບຽນ ແຫ່ງ ສສ ຫວຽດນາມ.

ການພົບປະແລກປ່ຽນບົດຮຽນຄັ້ງນີ້ ເປັນຄັ້ງທຳອິດຂອງສະພາປະຊາຊົນແຂວງອຸດົມໄຊ ຊຸດທີ II, ຫົວຂໍ້ໃນການພົບປະຄັ້ງນີ້ ແມ່ນວຽກງານໂຄງປະກອບການຈັດຕັ້ງ ແລະ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງສອງສະພາປະຊາຊົນແຂວງ. ໃນພິທີໄດ້ຮັບຟັງການລາຍງານສະພາບລວມໂດຍຫຍໍ້ການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງດຽນບຽນ ລາຍງານໂດຍສະຫາຍ ລໍ ວັນ ເຟືອງ. ຈາກນັ້ນ, ສະຫາຍ ຄຳດີ ວົງລ້ອມ ໄດ້ຕາງໜ້າຫົວໜ້າຄະນະຜູ້ແທນສະພາປະຊາຊົນແຂວງອຸດົມໄຊ ລາຍງານສະພາບລວມໂດຍຫຍໍ້ວຽກງານຂອງສະພາປະຊາຊົນແຂວງ. ພາຍຫຼັງສອງຝ່າຍສຳເລັດການລາຍງານ ຄະນະຜູ້ແທນທັງສອງຝ່າຍໄດ້ມີຄຳຄິດຄຳເຫັນແລກປ່ຽນກັນວຽກງານການເຄື່ອນໄຫວຂອງສະພາປະຊາຊົນແຂວງ, ພາລະບົດບາດການຈັດຕັ້ງປະຕິບັດຂອງຄະນະກຳມະການ ເປັນຕົ້ນແມ່ນວຽກງານການຕິດຕາມກວດກາ, ການແກ້ໄຂຄຳຮ້ອງຂໍຄວາມເປັນທຳ, ການຄົ້ນຄວ້າພິຈາລະນາ, ຮັບຮອງການຈັດສັນງົບປະມານ, ການປະສານລະຫວ່າງສະພາປະຊາຊົນແຂວງ ກັບອົງການປົກຄອງແຂວງ ແລະ ການເປັນເສນາທິການຂອງສະພາປະຊາຊົນແຂວງ ວຽກງານອື່ນໆ ເຊິ່ງການປະກອບຄຳເຫັນເຕັມໄປດ້ວຍບັນຍາກາດຟົດຟື້ນມີຄວາມສາມັກຄີໄມຕີຈິດ ແລະ ອົບອຸ່ນດີ ແລະ ໃນຕໍ່ໜ້າທັງສອງຝ່າຍໄດ້ສະເໜີຍິນດີຈະໄດ້ສືບຕໍ່ຢ້ຽມຢາມ, ໄປມາຫາສູ່ກັນເຊິ່ງກັນແລະກັນ, ພົບປະແລກປ່ຽນບົດຮຽນວຽກງານສະພາປະຊາຊົນແຂວງເປັນຕົ້ນແມ່ນວຽກງານຂອງຄະນະກຳມະການ, ຄະນະເລຂາທິການ/ຫ້ອງວ່າການສະພາປະຊາຊົນແຂວງ ແລະ ວຽກງານອື່ນໆ ໂດຍຜັດປ່ຽນກັນເປັນເຈົ້າພາບຕາມເງື່ອນໄຂຕົວຈິງ.

ພາຍຫຼັງທີ່ໄດ້ຈັດພິທີພົບປະແລກປ່ຽນບົດຮຽນ ຄະນະຜູ້ແທນສະພາປະຊາຊົນແຂວງອຸດົມໄຊ ໄດ້ທັດສະນະເບິ່ງການຂະຫຍາຍຍົກລະດັບ, ປັບປຸງ, ກໍ່ສ້າງສະໜາມບິນແຂວງດຽນບຽນ, ທ່ຽວຊົມສະຖານທີ່ຮ່ອງຮອຍປະຫວັດສາດບາງຈຸດ (ຈຸດ A1 ໄຊຊະນະບັ້ນຮົບດຽນບຽນຟູ, ຖ້ຳ ເດີກາສເຕີ) ແລະ ທັດສະນະເບິ່ງການຜະລິດ, ຫົວໜ່ວຍທຸລະກິດ, ການພັດທະນາເສດຖະກິດ-ສັງຄົມ; ວິທີການລ້ຽງກວາງ, ການປູກຕົ້ນໄມ້ກິນໝາກ; ໝາກກາດາເມ່ຍ, ໝາກມີ້, ໝາກພຸກ ແລະ ກາເຟຢູ່ເມືອງອັງ ຕາແສງແຫ່ງເສື່ອງ ແຂວງດຽນບຽນ.

**(ສີແຫວງ ສີບຸນເຮືອງ)**

ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED

# ການຜະລິດຂອງປະຊາຊົນລາວເພື່ອເປັນສິນຄ້າສົ່ງອອກ ຍັງມີໜ້ອຍ

ໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຜ່ານມາ, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ໄດ້ຕາງໜ້າຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ກໍຄືສະພາປະຊາຊົນແຂວງຫົວພັນ ໃຫ້ການສຳພາດຕໍ່ສື່ມວນຊົນ ກ່ຽວກັບບາງບັນຫາທີ່ປະຊາຊົນ ແລະ ສັງຄົມໃຫ້ຄວາມສົນໃຈ ທ່ານໃຫ້ຮູ້ວ່າ:

ບັນຫາທີ່ພົ້ນເດັ່ນ ແລະ ເຄັ່ງຮ້ອນຂອງແຂວງຫົວພັນ ທີ່ທ່ານໄດ້ຮັບຜິດຊອບຈັດຕັ້ງ ແລະ ເຄື່ອນໄຫວນຳພາ-ຊີ້ນຳ ໂດຍພື້ນຖານແມ່ນຄະນະສະມາຊິກສະພາແຫ່ງຊາດ ກໍຄືສະພາປະຊາຊົນແຂວງຫົວພັນ ໄດ້ເອົາໃຈໃສ່ຍົກສູງປະສິດທິພາບໃນການຈັດຕັ້ງປະຕິບັດວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເຊິ່ງສະແດງອອກດັ່ງນີ້:

- **ບັນຫາພົ້ນເດັ່ນ**

ໄດ້ເອົາໃຈໃສ່ສຸມໃສ່ການເຄື່ອນໄຫວວຽກງານຕາມ 3 ພາລະບົດບາດຄືດ້ານນິຕິກຳ, ດ້ານການຕົກລົງບັນຫາສຳຄັນຂອງແຂວງ ແລະ ດ້ານການຕິດຕາມ ກວດກາ; ໃນນາມເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າແຂວງຫົວພັນ, ໃນນາມຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ຜ່ານການເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4-5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງຫົວພັນ ຊຸດທີ II ສາມາດເຄື່ອນໄຫວໄດ້ທັງໝົດໄດ້ 56 ຈຸດ, ກວມເອົາ 48 ບ້ານ, 11 ເທດສະບານເມືອງ, 1 ໂຮງຮຽນຊົນເຜົ່າ ມີຜູ້ເຂົ້າຮ່ວມທັງໝົດ 6.094 ຄົນ ຍິງ 2.749 ຄົນ; ໄດ້ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 4-5 ຂອງສະພາປະຊາຊົນແຂວງຫົວພັນ ຊຸດທີ II, ຄົ້ນຄວ້າ, ປະກອບຄຳເຫັນເພື່ອພິຈາລະນາ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງ ໄດ້ທັງໝົດ 21 ສະບັບ. ນອກນັ້ນ, ຍັງໄດ້ປະສານສົມທົບກັບຄະນະປະຈຳສະພາປະຊາຊົນແຂວງ ພິຈາລະນາຮັບຮອງເອົາວຽກງານອື່ນໆຂອງແຂວງຫົວພັນ ໄດ້ 12 ສະບັບ; ໄດ້ເປັນເຈົ້າການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ໃນການ ຄົ້ນຄວ້າປະກອບຄຳເຫັນຕໍ່ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ຈຳນວນທັງໝົດ 16 ສະບັບ.

- **ບັນຫາທີ່ເຄັ່ງຮ້ອນ**

ຕໍ່ກັບບັນຫາທີ່ເຄັ່ງຮ້ອນໃນປັດຈຸຂອງປະເທດເຮົາ ເວົ້າລວມ ເວົ້າສະເພາະແມ່ນແຂວງຫົວພັນ ຜ່ານການຕິດຕາມ ກວດກາຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ກ່ຽວກັບການຈັດປະຕິບັດວຽກງານຂອງອົງການປົກຄອງແຂວງ ແລະ ຂະແໜງການກ່ຽວຂ້ອງ ຕິດພັນກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ເຫັນວ່າບັນຫາທີ່ເຄັ່ງຮ້ອນໃນປັດຈຸບັນແມ່ນການສຳຫຼວດ, ຂຸດຄົ້ນ, ປຸງແຕ່ງ ແລະ ສົ່ງອອກແຮ່ທາດ ເຊິ່ງບັນດາໂຄງການດັ່ງກ່າວໄດ້ສົ່ງຜົນກະທົບໂດຍກົງຕໍ່ຊີວິດການເປັນຢູ່ຂອງປະຊາຊົນ, ສັງຄົມ ແລະ ສິ່ງແວດລ້ອມ ເປັນຕົ້ນແມ່ນເນື້ອທີ່ທຳການຜະລິດຂອງປະຊາຊົນ, ມົນລະພິດຕ່າງໆ ຕໍ່ສັງຄົມ ແລະ ສິ່ງແວດລ້ອມ ແລະ ລະບົບເສັ້ນທາງຄົມມະນາຄົມເປ່ເພ ສາເຫດຕົ້ນຕໍແມ່ນເນື່ອງມາຈາກການຂົນສົ່ງແຮ່ທາດ.

- **ວິທີການແກ້ໄຂ**

ເອົາໃຈໃສ່ຊຸກຍູ້ພາກສ່ວນກ່ຽວຂ້ອງ ກ່ຽວກັບການຈັດຕັ້ງປະຕິບັດໂຄງການຕ່າງໆ ໃຫ້ທັນເຂົ້າສູ່ລະບຽບກົດໝາຍກຳນົດຢ່າງເຂັ້ມງວດ ໂດຍສະເພາະສະພາປະຊາຊົນແຂວງຕ້ອງໄດ້ເຂົ້າຮ່ວມແຕ່ຫົວທີ ໃນການຕິດຕາມກວດກາໃຫ້ມີປະສິດທິຜົນ ແລະ ຫຼີກລ່ຽງຜົນກະທົບຕາມມາ ໂດຍສະເພາະແມ່ນໂຄງການທີ່ເຮັດແບບທົດລອງ; ປະສານສົມທົບກັບອົງການປົກຄອງແຂວງ, ເມືອງ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຈັດກອງປະຊຸມຮ່ວມ ຄົ້ນຄວ້າ ປຶກສາຫາລື ແລະ ຈັດຕັ້ງປະຕິບັດໄປຕາມຂັ້ນຕອນຂອງກົດໝາຍກຳນົດເພື່ອໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ; ແຕ່ງຕັ້ງຄະນະທີມງານລົງຕິດຕາມກວດກາເກັບກຳຂໍ້ມູນຕົວຈິງເພື່ອເປັນຂໍ້ມູນສະເໜີໃຫ້ອົງການປົກຄອງແຂວງ ແລະ ຂະແໜງການກ່ຽວຂ້ອງ ແກ້ໄຂໃຫ້ທັນຕາມກຳນົດເວລາ; ສະເໜີໃຫ້ລັດຖະບານອອກນິຕິກຳໃຕ້ກົດໝາຍໃຫ້ຮັດກຸມ, ເຂັ້ມງວດຕື່ມ ໃນການຄຸ້ມຄອງການສຳຫຼວດ, ຂຸດຄົ້ນ, ປຸງແຕ່ງ ແລະ ສົ່ງອອກແຮ່ທາດທີ່ສົ່ງຜົນກະທົບຕໍ່ທຳມະຊາດ ແລະ ສັງຄົມ.



ໂອກາດດັ່ງກ່າວ ທ່ານຍັງໃຫ້ຮູ້ຕື່ມວ່າ: ຕໍ່ກັບບັນຫານີ້ ໃນນາມຂ້າພະເຈົ້າເປັນຕົວແທນຂອງປະຊາຊົນບັນດາເຜົ່າຢູ່ແຂວງຫົວພັນ ໄດ້ປະຕິບັດພາລະບົດບາດຕິດຕາມກວດກາວຽກງານຂອງອົງການປົກຄອງແຂວງ ເປັນຕົ້ນແມ່ນໄດ້ເຄື່ອນໄຫວຕິດຕາມ ກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ຢູ່ 10 ເມືອງ ທົ່ວແຂວງ ມີຜູ້ເຂົ້າຮ່ວມທັງໝົດ 1135 ຄົນ ຍິງ 470 ຄົນ ໃນນັ້ນ:

- **ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ**

ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນໄດ້ລົງພົບປະ ໂອ້ລົມປະຊາຊົນ ຕິດຕາມ, ກວດກາ ການຄຸ້ມຄອງ ການຂຸດຄົ້ນ ແລະ ຂົນສົ່ງອອກແຮ່ທາດ ຢູແຂວງຫົວພັນ ເປັນຕົ້ນແມ່ນໂຄງການສຳຫຼວດ, ຂຸດຄົ້ນ, ປຸງແຕ່ງ ແລະ ສົ່ງອອກແຮ່ທາດ ທີ່ສູນກາງ ແລະ ແຂວງອະນຸຍາດ ໄດ້ທັງໝົດ 21 ໂຄງການ; ໂຄງການກໍ່ສ້າງ ແລະ ສ້ອມແປງຊົນລະປະທານ ໄດ້ 3 ໂຄງການ, ດ່ານປະເພນີ ແລະ ດ່ານ ທ້ອງຖິ່ນ ໄດ້ 2 ດ່ານ; ໂຄງການເຊົ່າ ແລະ ສຳປະທານທີ່ດິນເຕັກນິກກະສິກຳ 1 ແຫ່ງ ແລະ ພົບປະຢ້ຽມຊົມກຸ່ມຫັດຖະກຳເຄື່ອງປັ້ນດິນເຜົາ ແລະ ອື່ນໆ;

- **ການແກ້ໄຂບັນຫາຢາເສບຕິດ**

ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກທີ 8 ແຂວງຫົວພັນ ໄດ້ເອົາໃຈໃສ່ຕິດຕາມກວດກາການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງພາກສ່ວນທີ່ກ່ຽວຂ້ອງຢ່າງເປັນປົກກະຕິ ເຊິ່ງໃນໄລຍະຜ່ານມາໄດ້ຮັບການລາຍງານຄື: ຂຶ້ນບັນຊີເປົ້າໝາຍຜູ້ທີ່ພົວພັນກັບສິ່ງເສບຕິດປະເພດຕ່າງໆ ໄດ້ 2.775 ຄົນ; ມ້າງຄະດີໄດ້ 418 ເລື່ອງ, ຜູ້ຖືກຫາ 492 ຄົນ ຍິງ 60 ຄົນ, ຕ່າງປະເທດ (ຄົນຫວຽດນາມ) 20 ຄົນ; ດຳເນີນການສືບສວນ-ສອບສວນສະຫຼຸບສົ່ງໄອຍະການສຳເລັດຈຳນວນ 311 ເລື່ອງ, ຕ້ອງຫາ 346 ຄົນຍິງ 42 ຄົນ, ຕ່າງປະເທດຄົນຫວຽດນາມ 14 ຄົນ; ຄະດີພວມດຳເນີນໃນປັດຈຸບັນມີ 107 ເລື່ອງ, ຕ້ອງຫາ 146 ຄົນ ຍິງ 18 ຄົນ, ຕ່າງປະເທດຄົນຫວຽດນາມ 6 ຄົນ; ຢຶດຂອງກາງໄດ້ຄື: ເຮໂຣອິນ 82 ແທ່ງ, ຢາບ້າ 386.847 ເມັດ, ມີນ້ຳໜັກ 39.192 ກິໂລກຣາມ; ຢາໄອສ໌ 43 ຫໍ່, ມີນ້ຳໜັກ 43 ກິໂລກຣາມ; ຝຸ່ນຂາວບໍ່ລະອຽດຄ້າຍຄືຢາໄອສ໌ 1 ຖົງ, ມີນ້ຳໜັກ 16,1 ກຣາມ; ຝິ່ນມີນ້ຳໜັກ 11.274 ກິໂລກຣາມ... ເງິນກີບທະນາຄານ 379,9 ລ້ານກີບ; ເງິນດົງຫວຽດນາມ 53,42 ລ້ານດົງ; ເງິນໂດລາ 200 ໂດລາ ແລະ ວັດຖຸ, ອຸປະກອນເສບຢາເສບຕິດອີກຈຳນວນໜຶ່ງ; ລົງສຳຫຼວດການລັກລອບປູກຕົ້ນຝິ່ນ 10 ເມືອງ; ມີເນື້ອທີ່ທັງໝົດ 1.006,8 ເຮັກຕາ, ຍັງຄ້າງບໍ່ທັນໄດ້ທຳລາຍ 713,6 ເຮັກຕາ; ສູນປິ່ນປົວບຳບັດຢາເສບຕິດ ໄດ້ຮັບຜູ້ຕິດຢາເສບຕິດທັງໝົດ 272 ຄົນ ຍິງ 6 ຄົນ; ປິ່ນປົວດີສົ່ງຄືນຜູ້ປົກຄອງ 182 ຄົນ, ຄົນຍັງສືບຕໍ່ປິ່ນປົວ 90 ຄົນ ຍິງ 3 ຄົນ; ນັກໂທດທີ່ພົວພັນກັບຄະດີຢາເສບຕິດຈຳນວນ 445 ຄົນ, ຍິງ 63 ຄົນ, ຕ່າງປະເທດ 4 ຄົນ ຍິງ 0 ຄົນ; ໄດ້ຮັບການປ່ອຍຕົວ 188 ຄົນ ຍິງ 20 ຄົນ, ເສຍຊີວິດ 19 ຄົນ ຍິງ 0 ຄົນ. ນອກນັ້ນ, ຍັງໄດ້ຕິດຕາມກວດກາຕາມບົດລາຍງານ, ບົດສະຫຼຸບຂອງບັນດາພະແນກການ, ອົງການ ແລະ ຂະແໜງການກ່ຽວຂ້ອງຂອງແຂວງ ເພື່ອມາລາຍງານຕໍ່ກອງປະຊຸມສະພາປະຊາຊົນແຂວງ ໃນແຕ່ລະຄັ້ງ.

ຜ່ານການຈັດຕັ້ງປະຕິບັດພາລະບົດບາດຕິດຕາມກວດກາ 2 ວາລະແຫ່ງຊາດ ສາມາດສະຫຼຸບຜົນໄດ້ຮັບ ແລະ ຂໍ້ຫຍຸ້ງຍາກດັ່ງນີ້:

- **ຜົນໄດ້ຮັບ ຈາກການຕິດຕາມກວດກາ**

ຮັບປະກັນໃຫ້ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງປະຈຳເປັນເຂດເລືອກຕັ້ງ ໃນນາມເປັນຕົວແທນແຫ່ງສິດຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ໃນການປະຕິບັດພາລະບົດບາດຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ຕິດຕາມກວດກາ ການປະຕິບັດລັດຖະທຳມະນູນ ແລະ ກົດໝາຍ; ນຳເອົາຂໍ້ມູນຕົວຈິງມາເປັນບ່ອນອີງໃນການຕີລາຄາດ້ານດີ ແລະ ດ້ານຄົງຄ້າງ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລ້ວຊອກຫາທາງອອກຊ່ວຍອົງການປົກຄອງແຂວງ ໃນການກຳນົດແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງໃນແຕ່ລະໄລຍະໃຫ້ສອດຄ່ອງ ແລະ ຖືກຕ້ອງກັບສະພາບຕົວຈິງຂອງສັງຄົມ; ນຳເອົາຂໍ້ມູນຕົວຈິງມາເປັນບ່ອນອີງໃຫ້ແກ່ຄະນະສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ອົງການປົກຄອງແຂວງ ແລະ ຂະແໜງການກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດບັນດາມະຕິກອງປະຊຸມສະໄໝສາມັນເທື່ອທີ 4-5 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ໃຫ້ມີປະສິດທິພາບສູງຂຶ້ນກວ່າເກົ່າ; ສາມາດຖອດຖອນບົດຮຽນ, ປະສົບການ ແລະ ຄວາມຮັບຜິດຊອບໃນຂອດການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ການແບ່ງຂັ້ນຄຸ້ມຄອງ ແລະ ການອອກນິຕິກຳໃຕ້ກົດໝາຍລະຫວ່າງຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ ໃຫ້ລະອຽດ ແລະ ຈະແຈ້ງກວ່າເກົ່າ.

- **ຂໍ້ຫຍຸ້ງຍາກ**

ການເຄື່ອນໄຫວໂຄສະນາເຜີຍແຜ່ບັນດານິຕິກຳ ແລະ ການລົງຊຸກຍູ້ ຕິດຕາມ ກວດກາ ບັນດາວຽກ ທີ່ຕິດພັນກັບ 2 ວາລະແຫ່ງຊາດ ຍັງເຮັດບໍ່ໄດ້ດີເທົ່າທີ່ຄວນ ເນື່ອງຈາກວ່າງົບປະມານຍັງມີຈຳກັດ; ຄວາມຮັບຮູ້, ຄວາມເຂົ້າໃຈ ຂອງປະຊາຊົນບັນດາເຜົ່າຕໍ່ກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ຍັງເຫັນວ່າບໍ່ທັນເລິກເຊິ່ງເຖິງຖອງເທົ່າທີ່ຄວນ ສະແດງອອກ ການຜະລິດເພື່ອເປັນສິນຄ້າສົ່ງອອກຍັງມີໜ້ອຍ ການຜະລິດແມ່ນເຮັດພໍພຽງພໍກຸ້ມຢູ່ກຸ້ມກິນພາຍໃນຄອບຄົວ ຄຽງຄູ່ກັນນັ້ນ ສະພາບເສດຖະກິດຂອງປະເທດເຮົາແມ່ນຢູ່ໃນສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ເປັນຕົ້ນແມ່ນອັດຕາແລກປ່ຽນເງິນຕາ, ຄ່າຄອງຊີບສູງ, ເງິນກີບອ່ອນຄ່າ ແລະ ບັນຫາຢາເສບຕິດສ່ວນຫຼາຍເກີດຂຶ້ນໃນເຂດຫ່າງໄກສອກຫຼີກ ເຂດທຸລະກັນດານ ການເຂົ້າເຖິງຂອງເຈົ້າໜ້າທີ່ແມ່ນພົບຄວາມຫຍຸ້ງຍາກ ປະຊາຊົນຊ້ຳພັດບໍ່ໃຫ້ຄວາມຮ່ວມມືດີເທົ່າທີ່ຄວນ ຍັງປົກປ້ອງຜູ້ກະທຳຜິດ.

## ກອງປະຊຸມ...

(ຕໍ່ຈາກໜ້າ 5)

ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ແຂວງສາລະວັນ ພ້ອມທັງສະເໜີແນະກ່ຽວກັບບັນຫາພື້ນຖານຂອງທ້ອງຖິ່ນທີ່ປະຊາຊົນໄດ້ສະເໜີຜ່ານສະມາຊິກສະພາປະຊາຊົນແຂວງ, ອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ເຖິງອົງການປົກຄອງແຂວງໃຫ້ມີການປັບປຸງແກ້ໄຂ ເປັນຕົ້ນແມ່ນຊ່ວຍການແກ້ໄຂຄວາມທຸກຍາກ, ບັນຫາຄ່າຄອງຊີບລາຄາສິນຄ້າ, ລາຄານ້ຳມັນເຊື້ອໄຟ ທີ່ເພີ່ມຂຶ້ນ, ບັນຫາປາກົດການຫຍໍ້ທໍ້ຕ່າງໆ ແລະ ບັນຫາອື່ນໆ ທີ່ກ່ຽວພັນກັບການປະຕິບັດກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ.

ຕອນທ້າຍ, ທ່ານ ສີເຮັງ ຫອມສົມບັດ ໄດ້ມີຄຳເຫັນ ແລະ ໂອ້ລົມຊີ້ທິດເຍືອງທາງ ເພື່ອເປັນບ່ອນອີງໃຫ້ຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ ໂດຍທ່ານໄດ້ເນັ້ນໜັກວ່າ ຈົ່ງສືບຕໍ່ຍົກສູງຄວາມຮັບຜິດຊອບຂອງແຕ່ລະພາກສ່ວນໃນການປະຕິບັດໜ້າທີ່ການເມືອງຂອງຕົນຕາມທີ່ກຳນົດໄວ້ໃນກົດໝາຍ ກໍຄືນິຕິກຳໃຕ້ກົດໝາຍ ໃຫ້ມີຜົນສຳເລັດ, ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍມະຕິສຳຄັນຕ່າງໆຂອງສູນກາງພັກ ແລະ ຂອງແຂວງ ໃຫ້ເຂົ້າສູ່ລວງເລິກ ແລະ ປະສານສົມທົບກັນຊ່ວຍແກ້ໄຂຕໍ່ກັບຄຳສະເໜີ ແລະ ບັນຫາທາງສຽງຕ່າງໆທີ່ເກີດຂຶ້ນໃນສັງຄົມໃຫ້ທ່ວງທັນ ແລະ ວ່ອງໄວ; ທ່ານໄດ້ຮຽກຮ້ອງຕື່ມອີກວ່າ ໃຫ້ແຕ່ລະພາກສ່ວນຈົ່ງນຳເອົາເນື້ອໃນຈິດໃຈທີ່ຄົ້ນຄວ້າໃນກອງປະຊຸມໃນຄັ້ງນີ້ນຳໄປຈັດຕັ້ງຜັນຂະຫຍາຍເປັນແຜນທີ່ລະອຽດ ເຂົ້າໃສ່ວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ຢ່າງຕັ້ງໜ້າ.

**(ດີລຳພົນ ພົມມະຈັນ)**




# ກົດໝາຍ ວ່າດ້ວຍພິພິທະພັນ

ຕໍ່ຈາກສະບັບກ່ອນ

## ໝວດທີ 3
## ສິດ ແລະ ໜ້າທີ່ ຂອງບຸກຄະລາກອນພິພິທະພັນ

**ມາດຕາ 44 ສິດ ແລະ ໜ້າທີ່ ຂອງຜູ້ອຳນວຍການພິພິທະພັນ**

ຜູ້ອຳນວຍການພິພິທະພັນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳລວມວຽກງານພິພິທະພັນ ລວມທັງວຽກງານທາງດ້ານວິຊາການ ແລະ ວຽກງານບໍລິຫານ;
2. ຄົ້ນຄວ້າ, ຜັນຂະຫຍາຍ ທິດທາງ, ແຜນນະໂຍບາຍ ແລະ ແຜນການເຄື່ອນໄຫວວຽກງານພິພິທະພັນແລ້ວ ສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງ ຫຼື ເຈົ້າຂອງພິພິທະພັນ ພິຈາລະນາ;
3. ວາງແຜນການ, ສ້າງໂຄງການໃນການ ຈັດຫາ, ສຶກສາ, ສຳຫຼວດ, ຂຸດຄົ້ນ, ອະນຸລັກ ແລະ ໂຄສະນາ ເຜີຍແຜ່ ວັດຖຸພັນ ຕາມຂອບເຂດທີ່ຕົນໄດ້ຮັບອະນຸຍາດ;
4. ສະເໜີສ້າງ, ປັບປຸງ ກົງຈັກການຈັດຕັ້ງ, ບຳລຸງຍົກລະດັບພະນັກງານ;
5. ຄຸ້ມຄອງຊັບສິນ ຂອງພິພິທະພັນ;
6. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັການເຄື່ອນໄຫວວຽກງານພິພິທະພັນ ຕາມການຕົກລົງຂອງຂະແໜງການທີ່ກ່ຽວຂ້ອງ ຫຼື ເຈົ້າຂອງພິພິທະພັນ;
7. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານພິພິທະພັນຂອງຕົນ ຕໍ່ຂະແໜງການ ທີ່ກ່ຽວຂ້ອງ ຫຼື ເຈົ້າຂອງພິພິທະພັນ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 45 ສິດ ແລະ ໜ້າທີ່ ຂອງຮອງຜູ້ອຳນວຍການພິພິທະພັນ**

ຮອງຜູ້ອຳນວຍການພິພິທະພັນ ເປັນຜູ້ຊ່ວຍວຽກຜູ້ອຳນວຍການ, ຮັບຜິດຊອບວຽກງານທາງດ້ານວິຊາການ ແລະ ວຽກງານບໍລິຫານໃດໜຶ່ງ ຕາມການແບ່ງງານ ແລະ ຮັກສາການແທນຜູ້ອຳນວຍການ ຕາມການມອບໝາຍໃນເວລາຜູ້ອຳນວຍການບໍ່ຢູ່ ຫຼື ຕິດຂັດ.

**ມາດຕາ 46 ສິດ ແລະ ໜ້າທີ່ ຂອງພັນດາຮັກ ແລະ ນັກວິຊາການທີ່ກ່ຽວຂ້ອງ**

ພັນດາຮັກ ແລະ ນັກວິຊາການທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສຶກສາ, ຄົ້ນຄວ້າ, ວິໄຈ ແລະ ຈຳແນກປະເພດ ວັດຖຸພັນ;
2. ບັນທຶກຫຼັກຖານ ແລະ ຂຶ້ນທະບຽນ ວັດຖຸພັນ;
3. ສະເໜີແນວຄວາມຄິດກ່ຽວກັບວຽກງານພິພິທະພັນ ເປັນຕົ້ນ ເນື້ອໃນ ແລະ ເຕັກນິກການຈັດວາງ ສະແດງ;
4. ຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ ວັດຖຸພັນ ໃຫ້ມີຄວາມປອດໄພ;
5. ໂຄສະນາ ເຜີຍແຜ່ ແລະ ນຳທ່ຽວ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 47 ສິດ ແລະ ໜ້າທີ່ ຂອງຜູ້ຮ່ວມງານພິພິທະພັນ**

ຜູ້ຮ່ວມງານພິພິທະພັນ ມີ ສິດ ແລະ ໜ້າທີ່ ຕາມການຕົກລົງຂອງຄະນະອຳນວຍການພິພິທະພັນ ຫຼື ເຈົ້າຂອງພິພິທະພັນ.

## ພາກທີ V
## ສະມາຄົມພິພິທະພັນ

**ມາດຕາ 48 ສະມາຄົມພິພິທະພັນ**

ສະມາຄົມພິພິທະພັນ ແມ່ນ ການຈັດຕັ້ງສັງຄົມວິຊາຊີບພິພິທະພັນ ຊຶ່ງໄດ້ຮັບການອະນຸຍາດສ້າງຕັ້ງຂຶ້ນໂດຍກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂຶ້ນທະບຽນນຳກະຊວງພາຍໃນ, ມີພາລະບົດ ບາດເປັນໃຈກາງໃນການຕິດຕໍ່, ພົວພັນ, ປະສານສົມທົບວຽກງານ ລະຫວ່າງພິພິທະພັນຕ່າງໆ, ສຶກສາອົບຮົມ, ເຕົ້າ ໂຮມຄວາມສາມັກຄີ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງສະມາຊິກຕົນ ທັງເຂົ້າຮ່ວມໃນການປະຕິບັດແນວທາງ ນະໂຍບາຍ, ກົດໝາຍແລະລະບຽບການກ່ຽວກັບວຽກງານພິພິທະພັນ.

**ມາດຕາ 49 ສິດ ແລະ ໜ້າທີ່ ຂອງສະມາຄົມພິພິທະພັນ**

ສະມາຄົມພິພິທະພັນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຂົ້າຮ່ວມການສ້າງ ແລະ ການພັດທະນາວຽກງານພິພິທະພັນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ໂຄສະນາ ເຜີຍແຜ່ ແນວທາງ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານພິພິທະພັນ;
3. ສ້າງ ແລະ ປັບປຸງການຈັດຕັ້ງຂອງຕົນໃຫ້ມີຄຸນນະພາບ, ນຳໃຊ້ວິທະຍາສາດ, ເຕັກນິກ ແລະ ເຕັກໂນໂລຊີ ທີ່ທັນສະໄໝ ເຂົ້າໃນການເຄື່ອນໄຫວວຽກງານພິພິທະພັນ;
4. ຊຸກຍູ້, ສົ່ງເສີມ ແລະ ໃຫ້ການສະໜັບສະໜູນການເຄື່ອນໄຫວ ແລະ ການພັດທະນາພິພິທະພັນ;
5. ຄຸ້ມຄອງສະມາຊິກສະມາຄົມ ແລະ ເປັນຕົວແທນໃຫ້ແກ່ສະມາຊິກ ໃນການພົວພັນ, ຮ່ວມມື, ເຂົ້າຮ່ວມກອງປະຊຸມ, ສະເໜີຄຳເຫັນຕໍ່ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;
6. ໃຫ້ການຮ່ວມມື, ປະສານສົມທົບກັບຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກັບວຽກງານພິພິທະພັນ;
7. ສະເໜີການປະຕິບັດນະໂຍບາຍຕໍ່ສະມາຊິກຂອງຕົນທີ່ມີຜົນງານ ຫຼື ການນຳໃຊ້ມາດຕະການຕໍ່ສະມາຊິກຂອງຕົນ ທີ່ເຄື່ອນໄຫວບໍ່ຖືກຕ້ອງກ່ຽວກັບວຽກງານພິພິທະພັນ;
8. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານພິພິທະພັນ ຕໍ່ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 50 ຂໍ້ຫ້າມສຳລັບບຸກຄະລາກອນພິພິທະພັນ**

ຫ້າມ ບຸກຄະລາກອນພິພິທະພັນ ມີພຶດຕິກຳ ດັ່ງນີ້:

1. ນຳເອົາວັດຖຸພັນເຂົ້າ ຫຼື ອອກພິພິທະພັນ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງພິພິທະພັນ;
2. ທຳລາຍ, ສ້າງຄວາມເສຍຫາຍ ໃຫ້ແກ່ວັດຖຸພັນ ຫຼື ຊັບສິນ ຂອງພິພິທະພັນ;
3. ດັດແກ້ຂໍ້ມູນການຂຶ້ນທະບຽນວັດຖຸພັນ ໂດຍບໍ່ໄດ້ຮັບອະນຸຍາດ;
4. ສວຍໃຊ້ພິພິທະພັນໃນທາງທີ່ບໍ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;
5. ໂຄສະນາ ເຜີຍແຜ່, ສະໜອງຂໍ້ມູນ ກ່ຽວກັບວັດຖຸພັນ ໂດຍບໍ່ຖືກຕາມຄວາມຈິງ;
6. ບໍລິການຂໍ້ມູນສຳຄັນຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດ;
7. ເກັບຄ່າບໍລິການເກີນອັດຕາທີ່ໄດ້ກຳນົດໄວ້;
8. ນຳໃຊ້ທຶນ ຫຼື ຄ່າບໍລິການ ບໍ່ຖືກຕ້ອງຕາມກົດໝາຍ ຫຼື ບໍ່ໄດ້ຮັບອະນຸຍາດ;
9. ເປີດເຜີຍ ຂໍ້ມູນທີ່ເປັນຄວາມລັບ ກ່ຽວກັບວັດຖຸພັນເຄົ້າເດີມ;
10. ຊື້ ຂາຍ, ມອບໂອນ, ແລກປ່ຽນ ຫຼື ມອບວັດຖຸພັນເປັນຂອງຂວັນ ໃຫ້ແກ່ບຸກຄົນອື່ນ ຫຼື ເອົາເປັນຂອງສ່ວນຕົວ ໂດຍ

ອ່ານຕໍ່ສະບັບໜ້າ

## ມອບ-ຮັບ...

(ຕໍ່ຈາກໜ້າ 2)

ການຄຸ້ມຄອງຫໍສະພາແຫ່ງຊາດ ຕາງໜ້າກອງເລຂາຄະນະຊ່ວຍວຽກຂຽນເນື້ອໃນ, ຄັດເລືອກວັດຖຸພັນ ແລະ ຈັດວາງສະແດງຫ້ອງມູນເຊື້ອສະພາແຫ່ງຊາດ ກັບທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າກົມສື່ມວນຊົນ ໂດຍການເຂົ້າຮ່ວມເປັນສັກຂີພະຍານຂອງທ່ານ ນາງ ປິ່ງຄຳ ລາຊະສົມມາ ກຳມະການຄະນະປະຈຳ, ເລຂາທິການສະພາແຫ່ງຊາດ; ມີທ່ານຮອງເລຂາທິການສະພາແຫ່ງຊາດ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນພິທີໄດ້ຮັບຟັງລາຍງານການຈັດຕັ້ງປະຕິບັດວຽກງານໃນໄລຍະສອງປີຜ່ານມາ ເຊິ່ງໄດ້ມີການເກັບກຳຂໍ້ມູນດ້ານເນື້ອໃນດ້ວຍຫຼາຍຮູບການ ເຊັ່ນ: ໜ່ວຍງານຕົບແຕ່ງປະດັບປະດາ ໄດ້ອອກແບບທັງໃນຮູບ 2 ມິຕິ, 3 ມິຕິ ແລະ ວີດີໂອຕົວຢ່າງການຕົບແຕ່ງ ເພື່ອນຳມາຜ່ານຕໍ່ກອງປະຊຸມຫຼາຍຄັ້ງເພື່ອຂໍທິດຊີ້ນຳ ແລະ ການປະກອບຄຳເຫັນທີ່ຈຳເປັນຕໍ່ການຈັດວາງສະແດງ. ໜ່ວຍງານເນື້ອໃນ, ໜ່ວຍງານວັດຖຸພັນ ແລະ ສ້າງຮູບເງົາສາລະຄະດີ ກໍໄດ້ຂຸດຂໍ້ມູນຈາກບັນດາອະດີດການນຳຂອງສະພາແຫ່ງຊາດ, ລູກຫຼານ ແລະ ຄອບຄົວອະດີດການນຳທີ່ລ່ວງລັບໄປແລ້ວ, ຂໍ້ມູນຈາກເອກະສານສຳຄັນຕ່າງໆຂອງສະພາແຫ່ງຊາດແລະຊ່ອງທາງອື່ນໆ; ນອກຈາກນັ້ນ ກໍໄດ້ມີການເດີນທາງໄປແລກປ່ຽນ, ຢ້ຽມຢາມຫໍພິພິທະພັນທີ່ສຳຄັນໃນນະຄອນຫຼວງວຽງຈັນ ແລະ ຕ່າງແຂວງ ເພື່ອສ້າງເປັນຖານຂໍ້ມູນໃນການວາງສະແດງຂອງຕົນ. ພາຍຫຼັງແຕ່ລະໜ່ວຍງານໄດ້ມີການກະກຽມບັນດາເນື້ອໃນຂອງຕົນໄດ້ຫຼາຍພໍສົມຄວນແລ້ວ, ຄະນະກຳມະການຊີ້ນຳກໍໄດ້ມີທິດໃຫ້ຈັດພິມເນື້ອໃນ, ຕົບແຕ່ງ, ສ້າງຮູບຈຳລອງ ເພື່ອຈັດວາງສະແດງໃນຫ້ອງມູນເຊື້ອຕົວຈິງໃຫ້ມີຮູບພາບປະຈັກຕາ ເພື່ອສາມາດໃຫ້ການນຳ-ອະດີດການນຳຂັ້ນສູງ, ຄະນະປະຈຳສະພາແຫ່ງຊາດ ໄດ້ເຂົ້າໄປຢ້ຽມຊົມແລະມີຄຳເຫັນຕໍ່ຮູບແບບການຈັດວາງສະແດງ, ໂຄງປະກອບດ້ານເນື້ອໃນ ເຊິ່ງກໍໄດ້ຮັບການຢ້ຽມຊົມຫຼາຍຄັ້ງ; ພ້ອມກັນນັ້ນ ກໍໄດ້ຮັບຄຳເຫັນໃຫ້ປັບປຸງເນື້ອໃນໃຫ້ຄົບຖ້ວນ ອຸດົມສົມບູນຂຶ້ນເລື້ອຍໆ ໂດຍຄະນະຮັບຜິດຊອບໄດ້ມີການປັບປຸງເນື້ອໃນຄືນໃໝ່ພາຍຫຼັງການຢ້ຽມຊົມ, ປະກອບຄຳເຫັນຂອງການນຳ-ອະດີດການນຳຂັ້ນສູງ, ຄະນະປະຈຳສະພາແຫ່ງຊາດ. ຮອດປັດຈຸບັນ, ຖືວ່າດ້ານໂຄງຮ່າງເນື້ອໃນ, ຮູບແບບການຈັດວາງສະແດງ, ຮູບແບບການຕົບແຕ່ງ ຖືວ່າມີຄວາມລົງຕົວ ແລະ ຖືກຕ້ອງຕາມເນື້ອໃນຈິດໃຈຊີ້ນຳຂອງຂັ້ນເທິງ ເຊິ່ງຕໍ່ໄປກໍແມ່ນຂັ້ນຕອນການຈັດພິມລະອຽດ, ຈັດວາງສະແດງ ແລະ ຕົບແຕ່ງປະດັບປະດາຕົວຈິງຕາມການຊີ້ນຳ.

**(ນາງ ກຸກກິກ ບຸດດາໄຊ)**

## ຄະນະປະຈຳ...

(ຕໍ່ຈາກໜ້າ 1)

ບົດລາຍງານການຄົ້ນຄວ້າການສະເໜີແຕ່ງຕັ້ງຜູ້ພິພາກສາຊັ້ນໜຶ່ງຂອງສານປະຊາຊົນ, ສະເໜີແຕ່ງຕັ້ງປະທານ-ຮອງປະທານສານປະຊາຊົນທ້ອງຖິ່ນ, ສະເໜີອະນຸມັດສ້າງຕັ້ງກົມສັງລວມວິຊາການ ແລະ ສະຖິຕິສານ ຂອງສານປະຊາຊົນສູງສຸດ; ການສະເໜີຂໍພິຈາລະນາໃຫ້ສັດຕະຍາບັນແກ່ຂໍ້ຕົກລົງຮັບຮູ້ເຊິ່ງກັນແລະກັນ ດ້ານມາດຕະຖານຜະລິດຕະພັນຍານພາຫະນະອາຊຽນ; ລາຍງານຜົນສຳເລັດການເປັນເຈົ້າພາບຈັດກອງປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1; ລາຍງານຜົນການຕ້ອນຮັບການຢ້ຽມຢາມສອງຝ່າຍຂອງສະພາແຫ່ງຊາດ ແຫ່ງລາຊະອານາຈັກກຳປູເຈຍ ແລະ ສສ. ຫວຽດນາມ; ການປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ຕິດພັນກັບຍຸດທະສາດການສົ່ງອອກອຸດສາຫະກຳປຸງແຕ່ງ; ໜັງສືສະເໜີຂອງລັດຖະບານກ່ຽວກັບການຂໍດັດປັບລັດຖະບັນຍັດ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ໃນຂົງເຂດກະຊວງປ້ອງກັນຄວາມສະຫງົບໃນການອອກບັດລົດ ແລະ ໜັງສືສະເໜີຂອງລັດຖະບານ ກ່ຽວກັບການສະເໜີຂໍດັດປັບລັດຖະບັນຍັດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 (ສະບັບປັບປຸງ 2021) ພາກທີ VIII ຄ່າທຳນຽມ ແລະ ຄ່າບໍລິການຂົງເຂດຕ່າງປະເທດ.

**(ນາງ ກຸກກິກ ບຸດດາໄຊ)**

## ຖອດຖອນ...

(ຕໍ່ຈາກໜ້າ 2)

ຢ້ຽມຢາມ ສປປລາວ, ຂະບວນລົດຖີບມິດຕະພາບ ແລະ ການແຂ່ງຂັນລົດຖີບ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມຈາກແຕ່ລະພາກສ່ວນໄດ້ພ້ອມກັນປະກອບຄຳຄິດຄຳເຫັນ, ແລກປ່ຽນ ແລະ ຖອດຖອນບົດຮຽນຮ່ວມກັນ ໂດຍໄດ້ຍົກໃຫ້ເຫັນດ້ານດີທີ່ຄວນສືບຕໍ່ ແລະ ຂໍ້ຄົງຄ້າງໃນດ້ານຕ່າງໆທີ່ຈະໄດ້ປັບປຸງແກ້ໄຂ ເພື່ອເຮັດໃຫ້ການເປັນເຈົ້າພາບໃນຄັ້ງຕໍ່ໆໄປ ຫຼື ການເຮັດກິດຈະກຳອື່ນໆ ມີຄວາມສະດວກ ແລະ ມີຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

**(ພາບ: ນາງ ກຸກກິກ ບຸດດາໄຊ; ຂ່າວ: ນາງ ສຸພາວັນ ທອມສະນິດ)**




# ສະເໜ່ຂອງວັດທະນະທຳ (ທ່າມກາງກະແສໂລກາພິວັດ)

# ດົ້ນກົບເມກ



ສະເໜ່ດຶງດູດຈິດໃຈແຂກທ່ອງທ່ຽວທີ່ເປັນຈຸດສຳຄັນຄື: ວິຖີຊີວິດວັດທະນະທຳຂອງຊາດໃດໜຶ່ງທີ່ຍັງສາມາດຮັກສາ ແລະ ສົ່ງເສີມວັດທະນະທຳເດີມຂອງຕົນໄວ້ໄດ້ ຖ້າວ່າຄົນໃນສັງຄົມບໍ່ຕື່ນຮູ້ ຫຼື ບໍ່ໃຫ້ຄວາມສຳຄັນຕໍ່ວັດທະນະທຳຕົນເອງ ມັນຈະຖືກກືນກິນໃຫ້ກົມກືນໄປກັບກະແສໂລກາພິວັດທາງດ້ານວັດທະນະທຳ ເພາະພວກເຂົາສ້າງຄ່ານິຍົມທາງວັດຖຸ-ບໍລິໂພກນິຍົມການໃຊ້ຊີວິດໃຫ້ຄ້າຍກັນເຊັ່ນ: ກິນອາຫານ, ການແຕ່ງໂຕ, ເບິ່ງໜັງຟັງເພັງ.

ການດູດກືນທາງວັດທະນະທຳ ກະແສໂລກຕໍ່ວັດທະນະທຳທ້ອງຖິ່ນ ເຂົາມຸ່ງໄປທີ່ໄວໜຸ່ມເຍົາວະຊົນທີ່ຍັງບໍ່ທັນເຂັ້ມແຂງ ຮູ້ຈັກຮາກເຫງົ້າວັດທະນະທຳຊາດຕົນ ແລ້ວໃຊ້ວິຖີຊີວິດໄປຕາມກະແສວັດທະນະທຳໄຫຼວຽນຂອງໂລກທຶນນິຍົມ ເຊິ່ງອາດມີບາງຄົນເຖິງຂັ້ນອອກປາກຊື່ນຊົມຂອງຄົນອື່ນດີກວ່າຂອງຕົນ, ຜູ້ຂຽນຄິດເຫັນຄຳເວົ້າຄົນບູຮານ ທີ່ເຕືອນໄວ້ວ່າ ຢ່າຫຼົງຂອງເກົ່າ ຢ່າເມົາຂອງໃໝ່. ການພັດທະນາໃຫ້ກ້າວໜ້າທາງເສດຖະກິດເປັນສິ່ງທີ່ດີ ແຕ່ຖ້າບໍ່ຕັ້ງສະຕິປັນຍາເຫັນຄວາມສຳຄັນທາງວັດທະນະທຳ ແລະ ບໍ່ເຊີດຊູສົ່ງເສີມ, ໃຫ້ລາງວັນຜູ້ມີຜົນງານເປັນຕົວຢ່າງ ເປັນແຮງກະຕຸ້ນຊຸກຍູ້ ກໍຍິ່ງຈະພາໃຫ້ຄົນຈືດຈາງຕໍ່ມູນມັງມໍລະດົກວັດທະນະທຳຂອງຕົນ, ການພັດທະນາລັກສະນະໃຫ້ແລ່ນຕາມ ຫຼື ຫຼົງຕາມຄວາມທັນສະໄໝທາງວັດຖຸ ໝາຍວ່າ ຄວາມຈະເລີນທາງວັດທະນະທຳ ແລະ ຈິດໃຈ ຜູ້ຂຽນເຂົ້າໃຈວ່າ: ເຮົາຍິ່ງຈະສູນເສຍສະເໜ ແລະ ເອກະລັກວັດທະນະທຳ ຂອງຕົນໄປເທື່ອລະໜ້ອຍ; ການຍ່າງຕາມເອົາແບບຢ່າງໃນການພັດທະນາທາງເສດຖະກິດເພື່ອປາກທ້ອງເຫັນວ່າ ຖ້າມີລະດັບຫຼັກການ; ຂັ້ນຕອນພໍພຽງ ກໍຈະດີຕໍ່ການສ້າງຄວາມສົມດູນເຊີດຊູວັດທະນະທຳໄປຄຽງຄູ່ກັນ ເພາະວັດທະນະທຳມັນເປັນສະເໜເປັນຈິດວິນຍານລວມຂອງຄົນໃນຊາດ.

ສະເໜຂອງວັດທະນະທຳ ມັນພົວພັນກ່ຽວເນື່ອງໃນວິຖີຊີວິດ-ຮີດຄອງປະເພນີ, ການນຸ່ງຖື ແລະ ໃນປາງບຸນຕ່າງໆທີ່ປະຊາຊົນສືບທອດຮັກສາມາຍາວນານ ການພັດທະນາທີ່ດີຍືນຍົງ ເຂົ້າໃຈວ່າຖ້າໃຊ້ຫຼັກການບໍ່ຫຼົງຂອງເກົ່າບໍ່ເມົາຂອງໃໝ່ ຄົງຈະເຮັດໃຫ້ເຮົາຕື່ນຮູ້ໃນການຮັກຫອມວັດທະນະທຳຂອງຕົນ.

# ປະຫວັດຕົວອັກສອນລາວ ກ (ຖໍ່ຫົວອອກ) ຫຼື ຖ (ຖໍ່ຫົວເຂົ້າ)

# Sengfa Hola

ປະຫວັດຄວາມເປັນມາຂອງ ຖ ຖົງ ມີບາງໄລຍະເປັນ ຖ (ຖໍ່ຫົວເຂົ້າ) ບາງໄລຍະກໍເປັນ ກ (ຖໍ່ຫົວອອກ).

ນັບຕັ້ງແຕ່ທີ່ລາວເຮົາໄດ້ມີຕົວອັກສອນໃຊ້, ຕົວ ຖ ນີ້ ກໍເປັນ ຖ (ຖໍ່ຫົວເຂົ້າ). ເມື່ອໄປສຳຫຼວດເບິ່ງເອກະສານເກົ່າໆທັງໃບລານ ແລະ ເປັນປຶ້ມທີ່ພິມດ້ວຍເຈ້ຍນັບຖອຍຫຼັງແຕ່ປີ 1932 ລົງໄປ ລ້ວນແຕ່ເປັນ ຖ (ຖໍ່ຫົວເຂົ້າ).

ຈົນຮອດປີ 1935 ຄະນະກຳມະການຫໍສະໝຸດພຸດທະສະພາຈັນທະບູລີ ໄດ້ຈັດພິມໄວຍາກອນລາວພາກ "ອັກຂະຫຼະວິທີ" ທີ່ມີພະຍັນຊະນະ 41 ຕົວ ເຊິ່ງສາມາດຂຽນຄຳຕາມສຽງພາສາປາລີ-ສັນສະກິດໄດ້ຢ່າງຄົບຖ້ວນ ແລະ ໃນນັ້ນ ຕົວ ຖ ກໍມີ ຖ ສອງຕົວ ຄື ຖ ຖົງ (ຖໍ່ຫົວເຂົ້າ) ແລະ ກ ຖານ (ຖໍ່ຫົວອອກ). ຈາກການມີ ຖ ສອງໂຕທີ່ມີຮູບຂຽນຕ່າງກັນ ໂຕໜຶ່ງຫົວເຂົ້າ ໂຕໜຶ່ງຫົວອອກ ກໍໄດ້ຮັບການນຳໃຊ້ຈາກສັງຄົມ ໂດຍສະເພາະ ກ (ຖໍ່ຫົວອອກ) ຈະຮູ້ສຶກວ່າຂຽນງ່າຍ ເພາະຂຽນລັກສະນະດຽວກັບຕົວ ກ ພຽງແຕ່ເພີ່ມຫາງໃຫ້ຍາວຕື່ມ.

ແຕ່ເມື່ອຮອດປີ 1948 ຄະນະກຳມະການອັກສອນສາດລາວ ໄດ້ອອກຂໍ້ບັງຄັບເປັນພະລາຊະໂອງການເລກທີ 10 ບັນຍັດວ່າ ພະຍັນຊະນະລາວມີແຕ່ 27 ຕົວ ໂດຍມີ ຕົວ ຣ ຈາກອັກສອນປາລີ-ສັນສະກິດມາເພີ່ມໃສ່ ແລະ ໂຕ ຖ ທີ່ໃຊ້ໃນເວລານັ້ນ ແມ່ນ ຖ (ຖໍ່ຫົວເຂົ້າ) ດັ່ງທີ່ໃຊ້ມາແຕ່ສະໄໝບູຮານ.

ຈົນຮອດປີ 1967 ປຶ້ມໄວຍາກອນລາວ ຂອງທ່ານພູມີ ວົງວິຈິດ ກໍໄດ້ນຳໃຊ້ຢູ່ໃນເຂດປົດປ່ອຍ ເຊິ່ງພະຍັນຊະນະມີພຽງ 26 ຕົວ ເພາະບໍ່ໄດ້ເພີ່ມຕົວ ຣ ໃສ່. ສຳລັບຕົວ ຖ ຖົງນັ້ນ ໄດ້ປ່ຽນຮູບມາໃຊ້ ເປັນ ກ (ຖໍ່ຫົວອອກ). ດັ່ງນັ້ນ, ໃນເຂດປົດປ່ອຍຈຶ່ງໃຊ້ຕົວ ກ (ຖໍ່ຫົວອອກ) ໃນການສຶກສາ ແລະ ສື່ສິ່ງພິມຕ່າງໆ.

ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍ ຈົນຮອດປີ 1976, ວຽກງານການສຶກສາທົ່ວປະເທດ ໂດຍສະເພາະໃນປຶ້ມແບບຮຽນ ກໍເລີ່ມໃຊ້ຕົວ ກ (ຖໍ່ຫົວອອກ) ຕາມໄວຍາກອນລາວ ປີ 1967. ແຕ່ເວລາການນຳໃຊ້ຕົວຈິງໃນສື່ສິ່ງພິມ ປາກົດມີເອກະສານບາງສະບັບກໍໃຊ້ ແລະ ພິມເປັນ ຖ (ຖໍ່ຫົວເຂົ້າ) ຍ້ອນວ່າຈັກພິມດີດສ່ວນຫຼາຍໄດ້ມີດຸມພິມທີ່ເປັນຕົວ ຖ. ຖ້າໃຜຢາກພິມໃຫ້ຖືກຕາມການກຳນົດຂອງທາງການ ເວລາພິມດີດກໍຕ້ອງກົດໃສ່ດຸມເລກ 7 ລາວ (ກ).

ຕໍ່ມາໃນຊຸມປີ 1990 ຄອມພິວເຕີໄດ້ເຂົ້າມາມີບົດບາດໃນການພິມ ກໍໄດ້ມີການສ້າງຕົວອັກສອນພິມ ທີ່ພວກເຮົາມັກເອີ້ນວ່າ 'ຟອນ' ເປັນຟອນພາສາລາວ ທີ່ສາມາດພິມຕົວ ກ ໄດ້ຢ່າງສະບາຍ. ແຕ່ເຖິງປານນັ້ນ ການສ້າງຟອນໃໝ່ໆກໍອີງໃສ່ແປ້ນພິມດີດທີ່ມີມາແຕ່ເກົ່າ ໂດຍໃຊ້ຕົວ ຖ ເປັນພະຍັນຊະນະ ສ່ວນ ກ ໃສ່ເປັນຕົວເລກ7ລາວ.ຍ້ອນແນວນັ້ນ, ບັນດາສື່ສິ່ງພິມຕ່າງໆ ບໍ່ວ່າໜັງສືພິມ ວາລະສານ ຕະຫຼອດຮອດປຶ້ມຕ່າງໆ ບາງສະບັບກໍໃຊ້ ຖ ແລະ ບາງສະບັບກໍໃຊ້ ກ.

ຈາກການໃຊ້ພະຍັນຊະນະຕົວທີ 11 ໃນຈຳນວນພະຍັນຊະນະ 27 ຕົວ ໃນສື່ສິ່ງພິມຕ່າງໆບໍ່ເປັນເອກະພາບກັນ. ຕົກມາຮອດປີ 2007 ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ກະຊວງສຶກສາທິການ ກໍໄດ້ມີການປັບປຸງປຶ້ມແບບຮຽນພາສາລາວຊັ້ນ ປ. 1 ໃໝ່ ໂດຍມີການປ່ຽນຕົວ ກ (ຖໍ່ຫົວອອກ) ມາເປັນ ຖ (ຖໍ່ຫົວເຂົ້າ) ເພື່ອໃຫ້ຈຳແນກໄດ້ລະຫວ່າງພະຍັນຊະນະ ຖ ຖົງ ແລະ ຕົວເລກ ກ. ນັບແຕ່ສົກຮຽນ 2008-2009 ເປັນຕົ້ນມາ ປຶ້ມແບບຮຽນດັ່ງກ່າວກໍໄດ້ຮັບການປະກາດໃຊ້ຢ່າງເປັນທາງການ.

ມາຮອດປັດຈຸບັນນີ້ ນັກຮຽນຮຸ່ນໃໝ່ທີ່ຮຽນ ປ.1 ນັບແຕ່ສົກຮຽນ2008-2009 ກໍຮູ້ຈັກແຕ່ ຖ (ຖໍ່ຫົວເຂົ້າ). ສ່ວນຜູ້ຮຽນ ປ.1 ກ່ອນໜ້ານັ້ນ ບາງຄົນກໍຍັງລຶ້ງຂຽນ ກ (ຖໍ່ຫົວອອກ) ຢູ່ເພາະເຄີຍຮຽນມາແບບນັ້ນ. ແຕ່ໃນສື່ສິ່ງພິມບໍ່ປາກົດເຫັນ ກ (ຖໍ່ຫົວອອກ) ແລ້ວ, ຖ້າມີກໍຈະມີຄວາມໝາຍວ່າເລກ7.

ທ່ານຜູ້ອ່ານເດ, ລຶ້ງຂຽນ ກ (ຖໍ່ຫົວອອກ) ຫຼື ຖ (ຖໍ່ຫົວເຂົ້າ)?




# ວິທີເຮັດວຽກ

**ພາກທີ 4**

**ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)**

2. ໜ້າທີ່: ໜ້າທີ່ຂອງສະມາຊິກພັກ ມີດັ່ງນີ້:

ກ) ເພື່ອກູ້ຊາດ ແລະ ເພື່ອພັກຈົນຕະຫຼອດຊີວິດ.

ຂ) ຍົກເອົາຜົນປະໂຫຍດຂອງປະເທດຊາດ ແລະ ປະຊາຊົນສູງກວ່າໝົດ, ຂຶ້ນກ່ອນໝົດ.

ຄ) ຮັກສາລະບຽບວິໄນ ແລະ ຄວາມລັບຂອງພັກຈົນສຸດກຳລັງ.

ງ) ເດັດດ່ຽວປະຕິບັດມະຕິຕົກລົງຂອງພັກ.

ຈ) ອົດທົນພະຍາຍາມ ເປັນແບບຢ່າງໃຫ້ແກ່ປະຊາຊົນໃນທຸກວຽກການ ແລະ ທຸກເວລາ.

ສ) ອົດທົນພະຍາຍາມຮ່ຳຮຽນການເມືອງ, ການທະຫານ ແລະ ວັດທະນະທຳໃຫ້ດີກວ່າເກົ່າຂຶ້ນສະເໝີ ຕ້ອງໃກ້ຊິດປະຊາຊົນ ຮ່ຳຮຽນນຳປະຊາຊົນ ແລະ ພ້ອມກັນນັ້ນ ກໍນຳພາປະຊາຊົນເຮັດວຽກທີ່ເປັນປະໂຫຍດໃຫ້ແກ່ປະເທດຊາດ ແກ່ປະຊາຊົນ ແລະ ຕໍ່ສູ້ ຕ້ານຢັນທຸກສິ່ງທຸກຢ່າງທີ່ໃນການເສຍຫາຍມາສູ່ປະເທດຊາດ ແລະ ປະຊາຊົນ.

ຊ) ຕ້ອງຫຼໍ່ຫຼອມສະຕິຕໍ່ພັກ.

1. ຕ້ອງຍົກເອົາຜົນປະໂຫຍດຂອງພັກ ແລະ ຂອງຊາດຂຶ້ນສູງກວ່າໝົດ.

2. ພົບວຽກການອັນໃດ ກໍຕ້ອງກວດກາເບິ່ງໃຫ້ແຈ່ມແຈ້ງຄັກແນ່, ເມື່ອເຫັນວ່າເປັນອັນຖືກຕ້ອງແລ້ວ ກໍຕ້ອງເຮັດເຖິງຕົ້ນເຖິງປາຍແທ້ໆ, ຕ້ອງເຂົ້າໃຈວ່າຖ້າພັກເຮົາເຂົ້າໃຈສະພາບການຄັກແນ່ ແລ້ວວາງນະໂຍບາຍຈຶ່ງຈະຖືກ. ຖ້າຢາກໃຫ້ພັກເຂົ້າໃຈຄັກນັ້ນ ພະນັກງານ ແລະ ສະມາຊິກພັກຕ້ອງກວດກາສືບສວນເບິ່ງໃຫ້ຄັກໆແລ້ວລາຍງານໃຫ້ແຈ່ມແຈ້ງເປັນແຕ່ລະບ້ານ, ແຕ່ລະຕາແສງ, ແຕ່ລະເມືອງ, ແຕ່ລະແຂວງ ແລະ ເຂດໃຫ້ພັກຮູ້.

ຖ້າບໍ່ເຂົ້າໃຈສະພາບການແລ້ວ ໄປວາງນະໂຍບາຍນັ້ນ ມັນກໍເປັນຄືເອົາຜ້າມົນໄປອັດໄຫສີ່ລ່ຽມ, ມັນຈະບໍ່ເຂົ້າກັນຈັກເມັດ.

ອ່ານຕໍ່ສະບັບໜ້າ...

# ຂຽນຄຳລາວໃຫ້ຖືກ

#ຄູແສງ

| ຄຳລາວ | ຄຳໄທ |
|---|---|
| ເຂົ້າປຸ້ນ | ຂະໜົມຈີນ (ขนมจีน) |
| ປີ້ງໄກ່ | ໄກ່ຍ້າງ (ไก่ย่าง) |
| ຂົ້ວເຂົ້າ | ເຂົ້າຜັດ (ข้าวผัด) |
| ຈືນຂາໄກ່ | ທອດຂາໄກ່ (ทอดขาไก่) |
| ຕຳໝາກຫຸ່ງ | ສົ້ມຕຳ (ส้มตำ) |
| ແຈ່ວ | ນ້ຳພິກ (น้ำพริก), ນ້ຳຈິ້ມ (น้ำจิ้ม) |
| ເຂົ້າຈີ່ | ຂະໜົມປັງ (ขนมปัง) |
| ນ້ຳກ້ອນ | ນ້ຳແຂງ (น้ำแข็ง) |



## ສຸກສະບາຍຫາຍໂລຄາ

# ແສງສີຟ້າ

ໂດຍ: ສາວແວ່ນ



ແສງສີຟ້າ ທີ່ເກີດຈາກອຸປະກອນດິຈິຕອນຕ່າງໆເຊັ່ນ: ຄອມພິວເຕີ, ແທັບເລັດ ແລະ ໂທລະສັບ ອາດຈະເປັນອັນຕະລາຍຕໍ່ສາຍຕາຂອງເດັກນ້ອຍ ແລະ ການຫຼິ້ນອຸປະກອນເຫຼົ່ານີ້ເປັນເວລາດົນ ຈະນຳບັນຫາ ແລະ ຜົນກະທົບມາສູ່ເດັກນ້ອຍທັງໄລຍະສັ້ນ ແລະ ໄລຍະຍາວ. ຫາກເດັກນ້ອຍໃຊ້ເວລາຫຼາຍຊົ່ວໂມງໃນໜ້າຈໍດິຈິຕອນ ຜິດຕິກຳເຫຼົ່ານີ້ ເຮັດໃຫ້ມີບັນຫາ ແລະ ຄວາມສ່ຽງ ໃນການພັດທະນາສາຍຕາ ກໍຄືສຸຂະພາບຂອງຕາໄດ້ ແລະ ອັນຕະລາຍທີ່ເກີດຈາກແສງສີຟ້າປະກອບມີ:

- ພາວະຕາເມື່ອຍລ້າເກີດມາຈາກການເບິ່ງໜ້າຈໍດົນເກີນໄປ ຈຶ່ງເຮັດໃຫ້ການຫົດຂອງກ້າມຊີ້ນໃນສາຍຕາ, ຫົດຢູ່ຕະຫຼອດເວລາ ເຮັດໃຫ້ຕາມີອາການເມື່ອຍລ້າ ຈຶ່ງເປັນທີ່ມາອາການຕາມົວຊົ່ວຄາວ.

- ໂລກຈໍປະສາດຕາເສື່ອມ (AMD) ເພາະແສງສີຟ້າຈາກອຸປະກອນດິຈິຕອນ ຈະກະຕຸ້ນອະນຸມູນອິດສະຫຼະ ທີ່ສາມາດທຳລາຍຈຸລັງປະສາດຕາໄດ້ ຖ້າໃຊ້ເປັນເວລາດົນອາດຈະເພີ່ມຄວາມສ່ຽງເຮັດໃຫ້ເກີດໂລກຈໍປະສາດຕາເສື່ອມໄດ້;

-ສາຍຕາສັ້ນ(myopia pathological) ຫາກຈົດຈໍ່ຢູ່ກັບໜ້າຈໍເປັນເວລາດົນຫຼາຍກວ່າ 5 ຊົ່ວໂມງຕໍ່ມື້, ໂດຍສະເພາະໄລຍະຫ່າງບໍ່ເກີນ 20 ຊັງຕີແມັດ ເປັນເວລາຫຼາຍກວ່າ 45 ນາທີ ແມ່ນໜຶ່ງໃນບັນດາປັດໃຈທີ່ເຮັດໃຫ້ສາຍຕາສັ້ນໄວ ແລະ ເດັກນ້ອຍຈະເປັນຫຼາຍ;

ນອກຈາກນັ້ນ, ບໍ່ພຽງແຕ່ເຮັດໃຫ້ສາຍຕາສັ້ນໄວກວ່າປົກກະຕິ ແຕ່ຍັງເຮັດໃຫ້ເສຍບຸກຄະລິກກະພາບ ເພາະຈະຕ້ອງໄດ້ຍິ້ຕາຕະຫຼອດເວລາເມື່ອເບິ່ງບໍ່ແຈ້ງ; ສະນັ້ນ, ເພື່ອຫຼີກລ່ຽງອັນຕະລາຍຂອງແສງສີຟ້າ ແລະ ປົກປ້ອງດວງຕາຂອງເດັກ ໃນຄໍລຳສະບັບນີ້ ມີຄຳແນະນຳທີ່ດີສຳລັບພໍ່ແມ່ຄື:

- ເລືອກໃຊ້ແວ່ນຕາທີ່ມີເລນກອງແສງສີຟ້າ

- ໃຊ້ຈໍເຄື່ອງດິຈິຕອນທີ່ເໝາະສົມ ແລະ ປັບແສງສະຫວ່າງໜ້າຈໍໃຫ້ພໍດີ

- ກຳນົດໄລຍະຫ່າງລະຫວ່າງສາຍຕາກັບໜ້າຈໍໃຫ້ພໍດີ

- ປັບຂະໜາດໂຕອັກສອນໃນໜ້າຈໍດິຕິຈອນ ບໍ່ໃຫ້ມີຂະໜາດນ້ອຍຈົນເກີນໄປ

- ພັກສາຍຕາທຸກໆ 20 ນາທີ

ເພື່ອເປັນການປົກປ້ອງດວງຕາຂອງເດັກນ້ອຍ ສິ່ງທີ່ສຳຄັນທີ່ສຸດແມ່ນພໍ່ແມ່ຄວນພາລູກຂອງຕົນໄປກວດສາຍຕາເປັນປະຈຳຢ່າງໜ້ອຍປີລະເທື່ອ ເພາະວ່າການເບິ່ງເຫັນແມ່ນສຳຄັນທີ່ສຸດ ເຊິ່ງພວກເຮົາບໍ່ຄວນເບິ່ງຂ້າມ ເພາະວ່າພະຍາດຕາຫຼາຍຊະນິດ ບໍ່ສະແດງອາການຈົນກວ່າຈະເຂົ້າສູ່ໄລຍະທີ່ຮຸນແຮງ ເມື່ອເຖິງເວລານັ້ນ ມັນອາດຈະຊ້າເກີນໄປ ທີ່ຈະຮັກສາໄດ້ໃຫ້ເປັນປົກກະຕິ.

**www.amarinbabyandkids.com**




## ເຊີນນ້ອງຢາມຄ້າຍ

# ຊຽງເອງ

❊ ເຊີນນ້ອງມາແວ່ຢ້ຽມ    ເຂດຂ່ວງຊາຍທະຫານ
ໜຸ່ມສະກັນຂັນແຂງ    ທີ່ລັກແຍງນວນນ້ອງ
ເຫັນໜູ່ນາງກາຍຄ້າຍ    ຍາມຊາຍຫົດຜັກຢູ່
ພໍຢາກອວນເອີ່ຍຮ້ອງ    ໃຫ້ນາງນ້ອງແວ່ຢາມ

❊ ຍາມນີ້ຝົນຫ່າງຟ້າ    ຫ້າງທ່າທຳສວນ ກັນແລ້ວ
ເປັນຂະບວນການຜະລິດ    ເພິ່ງຕົນເອງກຸ້ມ
ຊຸມຜັກຊີຜັກບົ້ງ    ຜັກບົ່ວເລີຍຜັກກະລ່ຳ
ຜັກສະຫຼັດຜັກກາດຂາວໃຫຍ່ດົ້ວ    ຕົນໝີຕົ້ນໃຫຍ່ງາມ

❊ ຊຸມຜັກກິນພື້ນບ້ານ    ຫຼາຍຫຼາກມີຄົບ
ຊ່ຳຊີພັນຫອຍແຄງ    ຈຸ່ມກິນພັນຊິ້ນ
ຫຼືລາບແກງທັງກ້ອຍ    ຫຼາຍແນວປະສົມກິ່ນ
ຄ້າຍອ້າຍມີຄົບຖ້ວນ    ເຊີນນ້ອງແວ່ຢາມ

❊ ທັງຢາກຊວນມ່ອມນ້ອງ    ມາແວ່ຫົດສວນ
ຫັດປູກຜັກສວນຄົວ    ເພີ່ມພູນພໍກຸ້ມ
ທຸກຢ່າງມີສວນແລ້ວ    ບໍ່ຈຳເປັນໄປຕະຫຼາດ
ປະຢັດເງິນໄວ້ໃຊ້    ຫວັງໄດ້ສ່ວນອອມ

❊ ປູກເອງບໍ່ກ່ຽວຂ້ອງ    ເລື່ອງປອດສານພິດ
ຂີ້ໄກ່ໝູງົວຄວາຍ    ຂີ້ແກບພຽງພໍແລ້ວ
ບໍ່ອາໄສທາງຊື້    ປຸຍຢາໃຫ້ເສຍຊື່
ຊີວະພາບເຮັດໄດ້    ຖ້າເຮົາຮູ້ຮ່ຳຮຽນ

❊ ຍາມນີ້ຄ້າຍພວກອ້າຍ    ຂຽວສະອຸ່ມງາມຕາ
ມີຜັກຂຽວພວມງາມ    ແວ່ຢາມເດີນ້ອງ
ຄາວກ່ອນນາງເຄີຍເວົ້າ    ເຮືອນຄຽງໃກ້ຄ້າຍມ່ອນ
ຍາມນີ້ຢາກຫຼີກຜັກຝາກນ້ອງ    ປານໃດແລ້ວຊິແວ່ຢາມ ອ້າຍເດ!






## ຫັກຫາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັບເອງ ບໍ່ເຄິ່ງພິທີການ)

# ສາວຈົ້ມ

❊ **ສະບາຍດີປີໃໝ່** ແລະ ເອົ້າໄດ້ວ່າ **2024** ເປັນປີທ່ອງທ່ຽວລາວຢ່າງເປັນທາງການ ພາຍໃຕ້ຄຳຂວັນ **"ທ່ອງທ່ຽວລາວປອດໄພ, ຊື່ນໃຈໃນວັດທະນະທຳ, ທຳມະຊາດ ແລະ ປະຫວັດສາດ"** ໂດຍສັງເກດເຫັນວ່າ ຫຼາຍສະຖານທີ່ ມີການກະກຽມ ແລະ ເປີດຕ້ອນຮັບແຂກ ເລີ່ມແຕ່**ໄລຍະປີໃໝ່ສາກົນເປັນຕົ້ນໄປ** ຂໍໃຫ້ຊາວພີ່ນ້ອງບັນດາເຜົ່າປວງຊົນລາວ ກະກຽມຕົນໃນບານ ເຈົ້າພາບງານປີນີ້ ກິລິຍາອາຈາເອົ້າ ຫວານນອບໆຟັງມ່ວນ **ໃດເນີ!** ຢ່າໄດ້ຈຸກຈິກເອົ້າ ເຮົາຊິເຢັຍຢຽດຫຍາມ **ບັ້ນແລ້ວ!**

❊ **"ສູ່"** ຄວາມສະຫງົບຂອງລາວ ກ່າວໃຫ້ຮູ້ວ່າ **11 ເດືອນ**ຜ່ານມາ **(ມັງກອນ-ພະຈິກ)** 2023 ທົ່ວປະເທດມີອຸບັດເຫດເກີດຂຶ້ນທັງໝົດ **182 ຄັ້ງ** ໃນນັ້ນ, ເສຍຊີວິດ 833ຄົນ ແລະ ມູນຄ່າເສຍຫາຍແມ່ນ **131.109.28.000ກີບ** ເຊິ່ງ**ສາເຫດຫຼັກ** ມາຈາກຜູ້ຂັບຂີ່**ລະເມີດກົດຈະລາຈອນ** ໂດຍສະເພາະແມ່ນ**ດື່ມສິ່ງມຶນເມົາ** ແລະ ຂັບຂີ່ລົດ**ໄວເກີນກຳນົດ,** ຂັບລົດ**ບໍ່ຖືກຊ່ອງຈະລາຈອນ...** ຂໍວິງວອນພີ່ນ້ອງ **ເອົາໃຈໃສ່ຄຳນຶງ** ລະບຽບກົດຈະລາຈອນ ເຄື່ອນໄຫຍັບຍ້າຍ **ປະຕິບັດຕາມປ້າຍ** ໂດສະບາເຕືອນບອກ ຈຶ່ງບໍ່ເກີດເຫດຮ້າຍ ຄືໄດ້ກ່າວມາ **ບັ້ນແລ້ວ!**

## ຊອບຍິ້ມ

# ແອ່ນຕຸ້ງ

### ເລື່ອງ: ເມຍຕົກລົດ

ລົດເມຄັນໜຶ່ງເກີດອຸບັດເຫດ ເຮັດໃຫ້ຜູ້ໂດຍສານເສຍຊີວິດທັງໝົດ ບັນດາສາມີ ຕ່າງກໍໂສກເສົ້າ; ຈາກນັ້ນ, ໜຶ່ງອາທິດຕໍ່ມາ ທຸກຢ່າງກໍເຂົ້າສູ່ສະພາວະປົກກະຕິ ແຕ່ຊາຍຄົນໜຶ່ງຍັງມີອາການເສຍໃຈຢູ່ຕະຫຼອດເວລາ ໝູ່ຄາໃຈເລີຍຖາມວ່າ:

ໝູ່: ມຶງເປັນຫຍັງ ຄືໂສກເສົ້າແທ້!

ຊາຍຄົນນັ້ນ: "ເມຍເຮົາຂຶ້ນລົດບໍ່ທັນ"

ໝູ່: ?!?!?!?!?



## ຄະຕິເຕືອນໃຈ

# ດອກຫຍ້າ

ເຫັນແຕ່ຫຼັງປີກ
ຢ່າພໍ້າວວ່າປີ້ນບໍ່ດີ




# ໜັງສື-ພັບ ປຶ້ງ-ສະໝຸດ-ປຶ້ມ

ປຶ້ມ ແມ່ນສື່ສິ່ງພິມທີ່ຮິບໂຮມຂໍ້ມູນປະເພດຕົວອັກສອນ ແລະ ຮູບພາບລົງໃສ່ເຈ້ຍ ຫຼືວັດຖຸຊະນິດອື່ນ ແລະ ໂຮມເຂົ້າກັນດ້ວຍວິທີການຫຍິບເປັນເຫຼັ້ມ ຫຼື ທາກາວເຂົ້າໃສ່ກັນຢູ່ບໍລິເວນຂອບດ້ານໃດດ້ານໜຶ່ງ ໂດຍມີຂະໜາດຕ່າງໆກັນ ແຕ່ມັກຈະພໍດີກັບການຈັບ ແລະ ເປີດອ່ານສະດວກ. ປຶ້ມສ່ວນຫຼາຍຈະເປັນບ່ອນຮິບໂຮມຂໍ້ມູນ ຄວາມຮູ້ ວັນນະຄະດີ ວັນນະກຳປະເພດຕ່າງໆ. ມາຮອດປັດຈຸບັນ ນອກຈາກປຶ້ມທີ່ເປັນເຈ້ຍແລ້ວ ກໍຍັງມີປຶ້ມເອເລັກໂຕຣນິກນຳອີກ ເຊິ່ງເອີ້ນທັບສັບພາສາອັງກິດວ່າ ອີບຸກ (e-book).

ຫຼາຍຄົນອາດມີຄວາມສົນໃຈກ່ຽວກັບຄຳວ່າ "ປຶ້ມ" ວ່າຄຳສັບນີ້ໃຊ້ມາໄດ້ດົນປານໃດແລ້ວ, ມັນມີສ່ວນກ່ຽວພັນກັບ "ໜັງສື" ຄືແນວໃດ.

ຖ້າພວກເຮົາໄປເບິ່ງນິຍາມຂອງຄຳວ່າ "ປຶ້ມ" ຢູ່ໃນວັດຈະນານຸກົມພາສາລາວຂອງສະຖາບັນວິທະຍາສາດສັງຄົມແຫ່ງຊາດ ປີ 2012, ເພິ່ນໄດ້ອະທິບາຍວ່າ "ປຶ້ມ" ແມ່ນຄຳນາມ ໝາຍເຖິງ "ເຈ້ຍທີ່ຈັດເປັນຫົວ, ໜັງສື, ຕຳລາ, ພັບຂຽນ, ພັບອ່ານ ເຊັ່ນ ປຶ້ມຂຽນ, ປຶ້ມອ່ານ, ປຶ້ມແບບຮຽນ, ປຶ້ມບົດເຝິກຫັດ, ປຶ້ມຕິດຕາມການຮຽນ" ແລະ ຍັງອະທິບາຍວ່າຄຳພ້ອງຄວາມໝາຍຂອງປຶ້ມແມ່ນ "ພັບ".

ຈາກການອະທິບາຍຄວາມໝາຍຂອງ "ປຶ້ມ" ຈາກວັດຈະນານຸກົມເຫຼັ້ມດັ່ງກ່າວກໍຊີ້ໃຫ້ເຫັນວ່າ "ປຶ້ມ" ກໍໝາຍເຖິງ "ໜັງສື" ເຊັ່ນ "ອ່ານປຶ້ມ" ສາມາດເວົ້າວ່າ "ອ່ານໜັງສື" ກໍໄດ້. ເພື່ອໃຫ້ພວກເຮົາເຫັນໄດ້ເຖິງຄວາມເປັນມາຂອງຄຳສັບ "ປຶ້ມ", ພາສາລາວມື້ລະຄຳສອງຄຳວັນນີ້ ຂໍນຳພາທ່ານຜູ້ອ່ານຫວນຄືນສູ່ອະດີດດັ່ງຕໍ່ໄປນີ້:

ຖ້າພວກເຮົາໄປເປີດເບິ່ງໜັງສືຝາລັ່ງ-ລາວ ປີ 1895, ຄຳສັບຝຣັ່ງ "livre (manuscript)» ແປເປັນຄຳລາວວ່າ sa phaou (ຖອດເປັນອັກສອນລາວ "ສະເພົາ ຫຼື ສາເພົາ" (ຄົງຫຍໍ້ມາຈາກ ເຈ້ຍສາ-ເຈ້ຍເພົາ)) ແລະ ຄຳສັບຝຣັ່ງ "livre (imprimé)» ແປເປັນຄຳລາວວ່າ nangsu – phim (ຖອດເປັນອັກສອນລາວ "ໜັງສື-ພິມ"). ພ້ອມດຽວກັນນັ້ນຢູ່ໃນໜ້າຂອງໜັງສືເຫຼັ້ມນີ້ທີ່ຂຽນຄຳແປເປັນອັກສອນລາວ ກໍມີແຕ່ຄຳວ່າ "ໜັງສື" ສະແດງວ່າໃນໄລຍະທ້າຍຂອງສະຕະວັດທີ 19 ເພິ່ນເອີ້ນປຶ້ມວ່າ "ໜັງສື".

ໃນວັດຈະນານຸກົມຝຣັ່ງ-ລາວ ປີ 1906 ໄດ້ບັນຈຸຄຳຝຣັ່ງ cahier ເຊິ່ງແປເປັນຄຳລາວທີ່ຂຽນດ້ວຍຕົວລາແຕັງວ່າ

phap nang su (ຖອດເປັນອັກສອນລາວ "ພັບໜັງສື"), ຍັງໄດ້ບັນຈຸຄຳ livre imprimé ເຊິ່ງແປເປັນຄຳລາວທີ່ພິມດ້ວຍຕົວ.

ລາແຕັງວ່າ nang su phim (ຖອດເປັນອັກສອນລາວ "ໜັງສືພິມ") ແລະ nang su pay lan (ຖອດເປັນອັກສອນລາວ "ໜັງສືໃບລານ"). ຈາກການແປຄຳຝຣັ່ງເປັນຄຳລາວ ເຮົາກໍສາມາດຕີລາຄາໄດ້ວ່າ ໃນສະໄໝຕົ້ນຂອງສະຕະວັດທີ 20 ເມື່ອເວົ້າເຖິງປຶ້ມຂຽນ ເພິ່ນກໍເອີ້ນວ່າ "ພັບໜັງສື" ຖ້າເອີ້ນສັ້ນໆ ກໍແມ່ນ "ພັບ". ສ່ວນ "ປຶ້ມອ່ານ" ທີ່ພາສາຝຣັ່ງວ່າ "livre" ນັ້ນ ເພິ່ນພັດເອີ້ນວ່າ "ໜັງສື". ສ່ວນຄຳວ່າ "ປຶ້ມ" ສະໄໝນັ້ນ ຍັງບໍ່ທັນມີໃຊ້ເທື່ອ.

ເມື່ອມາຮອດຊຸມປີ 1920 ກໍຍັງປາກົດມີໃຊ້ແຕ່ "ໜັງສື" ແລະ ເລີ່ມໃຊ້ຄຳວ່າ "ປຶ້ງ" ເຊິ່ງປາກົດເຫັນໃນປຶ້ມແບບສອນອ່ານພາສາລາວ ປີ 1926 ດັ່ງໃນບົດອ່ານບົດທີ 23 ໃນຫົວເລື່ອງ "ຄວາມໂງ່ຊ້າ" ໄດ້ຂຽນວະລີ "ອ່ານໜັງສື" ແລະ "ເປີດປຶ້ງອອກ".

ມາຮອດ ປີ 1935 ໃນປຶ້ມ ໄວຍາກອນລາວ ພາກອັກຂະຫຼະວິທີ ກໍປາກົດມີຄຳວ່າ ຫໍພະສະໝຸດ. ຄຳວ່າ "ສະໝຸດ" ໝາຍເຖິງ "ປຶ້ມ". ດັ່ງນັ້ນ, ຫໍສະໝຸດ ຈຶ່ງໝາຍເຖິງອາຄານທີ່ຮັກສາປຶ້ມປະເພດຕ່າງໆໄວ້. ແຕ່ເວລາໃຊ້ໃນຕົວຈິງ "ສະໝຸດ" ພັດໝາຍເຖິງ "ປຶ້ມຂຽນ" ດັ່ງໃນວັດຈະນານຸກົມລາວ ຂອງມະຫາສິລາ ວີລະວົງໄດ້ອະທິບາຍ ດັ່ງນີ້:

- ສມຸດ (ສະໝຸດ) ເປັນຄຳນາມ ໝາຍເຖິງ ປຶ້ມຂຽນ, ພັບສຳລັບຂຽນໜັງສື.

ນອກຈາກນັ້ນ ຍັງບັນຈຸຄຳຕ່າງໆທີ່ກ່ຽວຂ້ອງກັບ "ປຶ້ມ" ເຊັ່ນ

- ປຶ້ງ ເປັນຄຳນາມ ແລະພິມໃນວົງເລັບວ່າ (ເບິ່ງ ປຶ້ມ) ໝາຍຄວາມວ່າ ປຶ້ງ ກັບ ປຶ້ມ ມີຄວາມໝາຍອັນດຽວກັນ.
- ປຶ້ມ ເປັນຄຳນາມ ໝາຍເຖິງ ແບບ, ສະໝຸດ, ໜັງສື, ພັບຂຽນ.
- ພັບ ເປັນຄຳນາມ ໝາຍເຖິງ ປຶ້ມຂຽນໜັງສື, ແບບອ່ານ.
- ໜັງສື ເປັນຄຳນາມ ໝາຍເຖິງ ເຄື່ອງໝາຍໃຊ້ຂຽນແທນຄຳເວົ້າ.

ນອກຈາກນັ້ນ, ເວລາໃຊ້ໃນຊີວິດຕົວຈິງ "ໜັງສື" ທີ່ໝາຍເຖິງ ເຄື່ອງໝາຍໃຊ້ຂຽນແທນຄຳເວົ້າ ຍັງໝາຍເຖິງສື່ສິ່ງພິມທີ່ພວກເຮົາເອີ້ນວ່າ "ປຶ້ມ" ເຊັ່ນ "ອ່ານໜັງສື" ເຮົາສາມາດເວົ້າວ່າ "ອ່ານປຶ້ມ" ກໍໄດ້. ດັ່ງນິຍາຍສັ້ນເລື່ອງ "ພະພຸດທະຮູບສັກສິດ" ທີ່ຂຽນໂດຍ ສົມຈິນ ງິນ ໃນປີ 1944 ແລະພິມຄັ້ງທີສອງ ໃນປີ 1966 ກໍຂຽນໃສ່ໜ້າປົກວ່າ "ໜັງສືອ່ານຫຼິ້ນ..." ມາປັດຈຸບັນພວກເຮົາມັກໃຊ້ຄຳວ່າ "ປຶ້ມອ່ານຫຼິ້ນ..." ຫຼາຍກວ່າ.

ນັບແຕ່ຊຸມປີ 50 ຂອງສະຕະວັດທີ່ແລ້ວເປັນຕົ້ນມາ, ຄຳວ່າ "ປຶ້ມ" ກໍໃຊ້ແທນບັນດາຄຳທີ່ພ້ອງຄວາມໝາຍກັນ ເຊັ່ນ ສະໝຸດ ກໍເອີ້ນວ່າ "ປຶ້ມຂຽນ" (ແຕ່ "ຫໍສະໝຸດ" ພັດຍັງຮັກສາຄຳວ່າ «ສະໝຸດ» ຄືເກົ່າ ໂດຍບໍ່ປ່ຽນເປັນ «ຫໍປຶ້ມ» ແຕ່ຢ່າງໃດ) , «ພັບ» ຫຼື «ປຶ້ງ» ກໍປ່ຽນມາເປັນ "ປຶ້ມ" (ພັບ ໄປພົບມາໃຊ້ໃນ "ແຜ່ນພັບ"), ໜັງສື ກໍມັກເອີ້ນວ່າ "ປຶ້ມອ່ານ"ຫຼື"ປຶ້ມ"ຊື່ໆກໍໄດ້(ປັດຈຸບັນ"ອ່ານໜັງສື"ພວກເຮົາກໍມັກຈະເວົ້າວ່າ"ອ່ານປຶ້ມ").

ສະຫຼຸບລວມແລ້ວ, ຄຳວ່າ "ປຶ້ມອ່ານ" ທີ່ພວກເຮົາມັກເວົ້າໃນຊຸມມື້ນີ້ ເດີມດາເຄົ້າກໍແມ່ນ "ໜັງສື" ເຊິ່ງປັດຈຸບັນປາກົດວ່າຄົນຍັງໃຊ້ກັນຢູ່ ຕໍ່ມາໄດ້ຜັນມາເປັນ "ພັບອ່ານ" ແລະ "ປຶ້ງອ່ານ" ຕາມລຳດັບ ແຕ່ສອງຄຳສັບຫຼັງນີ້ບໍ່ສູ້ນິຍົມໃຊ້ແລ້ວ. ສ່ວນ "ປຶ້ມຂຽນ" ແຕ່ກ່ອນກໍເອີ້ນວ່າ "ພັບຂຽນ", "ປຶ້ງຂຽນ" ແລະ "ສະໝຸດ" ຕາມລຳດັບ ເຊິ່ງປັດຈຸບັນ ປຶ້ງຂຽນ ແລະ ສະໝຸດ ບໍ່ປາກົດວ່າມີຄົນນຳໃຊ້ ແຕ່ "ພັບຂຽນ" ຍັງມີຄົນຈຳນວນໜ້ອຍໜຶ່ງໃຊ້ຢູ່.

ແລ້ວທ່ານຜູ້ອ່ານເດ, ເຄີຍໃຊ້ ຄຳວ່າ ໜັງສື, ພັບ, ປຶ້ງ, ສະໝຸດ ແທນໃຫ້ "ປຶ້ມ" ບໍ່.




# "EU" ເຫັນດີດ້ານຫຼັກການກະກຽມຮ່າງກົດໝາຍຄວບຄຸມ AI ສະບັບປະຫວັດສາດ



*ປະເທດສະມາຊິກ ແລະ ຝ່າຍນິຕິບັນຍັດຂອງສະຫະພາບເອີຣົບ (ອີຢູ) ໄດ້ບັນລຸຂໍ້ຕົກລົງກ່ຽວກັບການຮ່າງກົດລະບຽບຄັ້ງປະຫວັດສາດເພື່ອຄວບຄຸມຮູບແບບປັນຍາປະດິດ ຫຼື ເອໄອ (Artificial Intelligence-AI) ຫຼັງຈາກການເຈລະຈາເປັນເວລາ 36 ຊົ່ວໂມງ.*

ສຳນັກຂ່າວ AFP ລາຍງານຈາກນະຄອນຫຼວງບຣຸກແຊນ, ປະເທດແບນຊິກ ເມື່ອວັນທີ 10 ທັນວາ 2023 ວ່າ: ຄະນະຜູ້ແທນເຈລະຈາ ໄດ້ບັນລຸຂໍ້ຕົກລົງການຄວບຄຸມການນຳໃຊ້ເອໄອໃນເອີຣົບ ເຊິ່ງພວກເຂົາກ່າວວ່າ ມັນຈະບໍ່ສົ່ງຜົນກະທົບຕໍ່ນະວັດຕະກຳໃນຂະແໜງການນີ້ ຫຼື ໂອກາດທີ່ຈະເປັນແຊ້ມດ້ານເອໄອຂອງເອີຣົບໃນອະນາຄົດ.

ທ່ານ ເທຍຣີ ເບຣຕອງ (Thierry Breton) ກຳມະການການຕະຫຼາດພາຍໃນຂອງສະຫະພາບເອີຣົບ ປະກາດວ່າ "ນີ້ແມ່ນໄລຍະເວລາແຫ່ງປະຫວັດສາດ! ດ້ວຍຂໍ້ຕົກລົງກ່ຽວກັບກົດໝາຍເອໄອໃນມື້ນີ້, ອີຢູຈຶ່ງກາຍເປັນພາກພື້ນທຳອິດທີ່ໄດ້ກຳນົດກົດລະບຽບທີ່ຈະແຈ້ງ; ກົດໝາຍວ່າດ້ວຍເອໄອເປັນຫຼາຍກວ່າປຶ້ມກົດລະບຽບ, ມັນເປັນຈຸດເລີ່ມຕົ້ນສຳລັບບໍລິສັດ startups ແລະ ນັກຄົ້ນຄວ້າໃນສະຫະພາບເອີຣົບ ໃນການເປັນຜູ້ນຳການແຂ່ງຂັນລະດັບໂລກສຳລັບເອໄອທີ່ເຊື່ອຖືໄດ້."

ຄະນະກຳມະການເອີຣົບ ຫຼື ອີຊີ ເຊິ່ງເປັນອົງການບໍລິຫານຂອງອີຢູ ໄດ້ສະເໜີກົດໝາຍນີ້ຄັ້ງທຳອິດເມື່ອປີ2021 ເພື່ອຄວບຄຸມລະບົບເອໄອ; ຕາມການປະເມີນຄວາມສ່ຽງຂອງຮູບແບບຊອບແວ ໂດຍລະບຸວ່າ ຍິ່ງເອໄອມີຄວາມສ່ຽງຕໍ່ດ້ານຕ່າງໆຂອງແຕ່ລະບຸກຄົນ ເຊັ່ນສິດທິ ຫຼື ສຸຂະພາບຂອງບຸກຄົນຢູ່ໃນລະດັບສູງເທົ່າໃດ ພາລະຂອງລະບົບຍິ່ງຈະຫຼາຍຂຶ້ນເຊັ່ນກັນ.

# ສະພາແຫ່ງຊາດຍີ່ປຸ່ນ ຜ່ານຮ່າງກົດໝາຍ "ກັນຊາເພື່ອການແພດ"



*ລັດຖະສະພາຍີ່ປຸ່ນ ໄດ້ຜ່ານຮ່າງກົດໝາຍເພື່ອອະນຸຍາດ "ສານສະກັດຈາກກັນຊາເພື່ອການແພດ" ແມ່ນຖືກຕ້ອງຕາມກົດໝາຍ, ຖືເປັນການປັບປຸງກົດໝາຍວ່າດ້ວຍຢາເສບຕິດທີ່ເຂັ້ມງວດຂອງປະເທດ; ແຕ່ໃນເວລາດຽວກັນ, ລັດຖະບານໄດ້ຍົກລະດັບການຫ້າມນຳໃຊ້ກັນຊາເພື່ອຄວາມມ່ວນຊື່ນ.*

ສຳນັກຂ່າວ AFP ລາຍງານຈາກນະຄອນຫຼວງໂຕກຽວ, ປະເທດຍີ່ປຸ່ນ ໃນວັນທີ 08 ທັນວາ 2023 ວ່າ: ການປັບປຸງກົດໝາຍຄວບຄຸມກັນຊາ ແລະ ສານເສບຕິດຂອງຍີ່ປຸ່ນ ໂດຍຜ່ານການລົງຄະແນນສຽງເຫັນດີຈາກລັດຖະສະພາ ເມື່ອວັນທີ 06 ທັນວາ 2023 ເຊິ່ງເປີດທາງໃຫ້ຍົກເລີກການຫ້າມຜະລິດຕະພັນທາງການແພດທີ່ໄດ້ມາຈາກກັນຊາ.

ການເຄື່ອນໄຫວດັ່ງກ່າວ ຖືວ່າເປັນໄຊຊະນະຂອງຄົນເຈັບຊາວຍີ່ປຸ່ນ ເຊິ່ງສະໜັບສະໜູນການເຂົ້າເຖິງຢາທີ່ຜະລິດຈາກກັນຊາ; ເຖິງແນວໃດກໍຕາມ, ການປັບປຸງກົດໝາຍຂ້າງເທິງນີ້ ຍັງມີຜົນກະທົບເຮັດໃຫ້ນະໂຍບາຍກັນຊາຂອງປະເທດເຂັ້ມງວດຫຼາຍຂຶ້ນເຊັ່ນກັນ.

ສຳລັບຍີ່ປຸ່ນ ການບໍລິໂພກກັນຊາເປັນການກະທຳຜິດທາງອາຍາ; ໂດຍກ່ອນໜ້າທີ່ມີການປັບປຸງກົດໝາຍ, ການສູດດົມກັນຊາແມ່ນຖືກຕ້ອງຕາມກົດໝາຍທາງດ້ານເຕັກນິກ, ຂະນະທີ່ການຄອບຄອງກັນຊາມີໂທດຈຳຄຸກສູງສຸດ 5 ປີ ເຊິ່ງຊ່ອງວ່າງດັ່ງກ່າວ ຖືກນຳໃຊ້ເພື່ອປົກປ້ອງຊາວກະສິກອນຈາກການຖືກຈັບໃນຂໍ້ກ່າວຫາສູດດົມກັນຊາທີ່ປູກໂດຍບໍ່ໄດ້ຕັ້ງໃຈ. ແຕ່ວ່າການຈັບກຸມຜູ້ກະທຳຜິດທີ່ກ່ຽວຂ້ອງກັບກັນຊາ ເຊິ່ງມີຈຳນວນເພີ່ມຂຶ້ນຢ່າງໄວວາເມື່ອບໍ່ດົນມານີ້ ໂດຍສະເພາະໃນບັນດາໄວໜຸ່ມ ແລະ ໄວຣຸ່ນ, ເຮັດໃຫ້ທາງການຍີ່ປຸ່ນໄດ້ຕັດສິນໃຈຍົກລະດັບມາດຕະການຄວບຄຸມການນຳໃຊ້ກັນຊາໃນປະເທດ.

ພາຍໃຕ້ກົດໝາຍສະບັບປັບປຸງ, ຜູ້ທີ່ຖືກຈັບໄດ້ວ່າເສບ ຫຼືຄອບຄອງກັນຊາ ອາດຈະໄດ້ຮັບໂທດຈຳຄຸກສູງສຸດ 7 ປີ.

ສະຖິຕິຈາກກະຊວງສາທາລະນະສຸກຍີ່ປຸ່ນ ເປີດເຜີຍວ່າ ຈຳນວນການຈັບກຸມທີ່ກ່ຽວຂ້ອງກັບກັນຊາ ໄດ້ບັນລຸເປັນສະຖິຕິສູງສຸດທີ່ 5.783 ຄົນ ໃນປີ 2021 ແລະ ຈາກການສືບສວນຂອງຕຳຫຼວດໃນປີ 2020 ຕໍ່ຜູ້ຖືກກ່າວຫາວ່າຄອບຄອງກັນຊາ 748 ຄົນ ພົບວ່າ ຜູ້ກະທຳຜິດເກືອບ 30 ສ່ວນຮ້ອຍ ກ່າວວ່າ ການຂາດມາດຕະການລົງໂທດສຳລັບການບໍລິໂພກກັນຊາມັນເປັນປັດໄຈທີ່ເຮັດໃຫ້ເຂົາເຈົ້າມີຄວາມກ້າຫານທີ່ຈະນຳໃຊ້ກັນຊາຫຼາຍຂຶ້ນ.

"ເມື່ອຄົນໜຸ່ມສາວ ນຳໃຊ້ກັນຊາໃນທາງທີ່ຜິດນັບມື້ນັບຫຼາຍຂຶ້ນ, ພວກເຮົາຫວັງວ່າການປັບປຸງກົດໝາຍສະບັບນີ້ ຈະຊ່ວຍຢຸດທ່າອຽງດັ່ງກ່າວໄດ້." ທ່ານ ຮີໂຣຄາຊຸ ມັດສຶໂນະ (Hirokazu Matsuno) ໂຄສົກຄະນະລັດຖະບານຍີ່ປຸ່ນ ກ່າວຫຼັງຈາກຮ່າງກົດໝາຍໄດ້ຜ່ານລັດຖະສະພາ.

## ເບິ່ງໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ສົ່ງເສີມສິນຄ້າທ້ອງຖິ່ນ ຜ່ານທຸລະກິດການທ່ອງທ່ຽວ

ໃນບົດຄວາມພາຍໃຕ້ຫົວຂໍ້ທີ່ຕັ້ງຂຶ້ນນີ້, ທ່ານຜູ້ອ່ານຈະຮູ້ໄດ້ກ່ຽວກັບຮູບການທຸລະກິດການທ່ອງທ່ຽວທີ່ເນັ້ນສົ່ງເສີມຜະລິດຕະພັນທ້ອງຖິ່ນ, ເຮັດໃຫ້ການຄ້າພາຍໃນທ້ອງຖິ່ນຈະເລີນເຕີບໂຕ. ເພື່ອໃຫ້ເຫັນໄດ້ພາບຢ່າງຈະແຈ້ງ, ຈຶ່ງຂໍຍົກຕົວຢ່າງ ການບໍລິການການທ່ອງທ່ຽວຢູ່ເກາະບາຫຼີ ແຫຼ່ງທ່ອງທ່ຽວລະດັບແຖວໜ້າຂອງອິນໂດເນເຊຍ ແລະ ຂອງໂລກ. ເນື້ອໃນທັງໝົດກ່ຽວກັບເລື່ອງນີ້ ແກະອອກມາຈາກໜັງສືພິມ The Nation 14 ມັງກອນ 2019. ເຖິງຈະເປັນຂ່າວອ່າວເກົ່າ ແຕ່ມັນຍັງເປັນບົດຮຽນທີ່ດີສຳລັບປະເທດລາວພວກເຮົາ ທີ່ອາໄສທຸລະກິດທ່ອງທ່ຽວສ້າງລາຍຮັບທີ່ສຳຄັນໜຶ່ງ. ຂ່າວໃຫ້ຮູ້ວ່າ ໂດຍເລີ່ມແຕ່ປີ 2019 ທາງອົງການປົກຄອງແຂວງ ບາຫຼີ ເຊິ່ງເປັນທີ່ຕັ້ງຂອງນະຄອນບາຫຼີນັ້ນ ໄດ້ອອກກົດລະບຽບທີ່ມີເນື້ອໃນເຄັ່ງຄັດຮັດກຸມ ກຳນົດໃຫ້ນຳໃຊ້ຜະລິດຕະພັນກະສິກຳ ແລະ ສັດທີ່ຜະລິດເອງໄດ້ພາຍໃນແຂວງ ເພື່ອບໍລິການນັກທ່ອງທ່ຽວຢູ່ຕາມບັນດາໂຮງແຮມ ກໍຄືຮ້ານອາຫານທັງທຸກໆແຫ່ງ ແນໃສ່ສົ່ງເສີມຊາວກະສິກອນ ແລະ ຜູ້ລ້ຽງສັດ ໃຫ້ມີສ່ວນແບ່ງລາຍໄດ້ຈາກການທ່ອງທ່ຽວ. ເນື້ອໃນລະອຽດຈຳນວນໜຶ່ງຂອງກົດລະບຽບໄດ້ກຳນົດໃຫ້ບັນດາຮ້ານສັບພະສິນຄ້າ ບໍລິການສິນຄ້າທີ່ຜະລິດຢູ່ພາຍໃນຫຼາຍຂຶ້ນ; ສ່ວນຢູ່ຕາມໂຮງແຮມ ແລະ ຮ້ານອາຫານນັ້ນ, ບໍລິມາດການນຳໃຊ້ຜະລິດຕະພັນພາຍໃນ ແມ່ນບໍ່ໃຫ້ຫຼຸດ 30%. ກົດລະບຽບທີ່ເລີ່ມປະຕິບັດກັນຢ່າງຈິງຈັງ ຕັ້ງໜ້າສະບັບນີ້ ທາງອົງການປົກຄອງແຂວງບາຫຼີໄດ້ປະກາດນຳໃຊ້ ແຕ່ວັນທີ 28 ທັນວາ 2018. ກົດລະບຽບໄດ້ກຳນົດຢ່າງຈຳເພາະ ເຈາະຈົງກ່ຽວກັບນຳໃຊ້ຜະລິດຕະພັນການປະມົງ ແລະ ອຸດສາຫະກຳທ້ອງຖິ່ນ ຄືອາຫານທີ່ບໍລິການຕາມໂຮງແຮມແລະຮ້ານອາຫານ ຕ້ອງນຳໃຊ້ເຄື່ອງປຸງແຕ່ງ (ນ້ຳປາ, ສະອິ້ວ ແລະ ອື່ນໆ) ບໍ່ໃຫ້ຫຼຸດ 10%, ການຈຳໜ່າຍຊີ້ນສັດ ແລະ ຜະລິດຕະພັນກະສິກຳຢູ່ຕາມຮ້ານສັບພະສິນຄ້າທີ່ຜະລິດໄດ້ເອງພາຍໃນແຂວງ ຕ້ອງບໍ່ໃຫ້ຫຼຸດ 60% ສ່ວນຜະລິດຕະພັນປະມົງ (ປາກຸ້ງຫອຍ...) ນັ້ນ ຕ້ອງຢູ່ໃນຊັດສ່ວນ 30% ເພື່ອບັນລຸເປົ້າໝາຍນຳໃຊ້ຜະລິດຕະພັນພາຍໃນເພື່ອບໍລິການນັກທ່ອງທ່ຽວນັ້ນ, ກົດລະບຽບໄດ້ກຳນົດໃຫ້ບັນດາເຈົ້າຂອງໂຮງແຮມ, ຮ້ານອາຫານ ແລະ ຮ້ານສັບພະສິນຄ້າສ້າງກົນໄກປະສານງານກັບຊາວກະສິກອນ, ຜູ້ລ້ຽງສັດ ແລະ ບັນດາຫົວໜ່ວຍປະກອບການຂະໜາດນ້ອຍ ແລະ ຂະໜາດກາງ. ນອກຈາກນັ້ນ ກົດລະບຽບຍັງໄດ້ກຳນົດລາຄາສິນຄ້າກະສິກຳທ້ອງຖິ່ນສູງກວ່າຕົ້ນທຶນການຜະລິດ 20% ການຊື້-ຂາຍ ຜະລິດຕະພັນທ້ອງຖິ່ນເພື່ອບໍລິການໃຫ້ນັກທ່ອງທ່ຽວນັ້ນ ຕ້ອງໃຊ້ເງິນສົດ, ສ່ວນການຊື້ດ້ວຍຮູບການຈ່າຍແບບອື່ນໆນັ້ນ ຕ້ອງໄດ້ເຮັດຜ່ານອົງການປົກຄອງ. ດ້ວຍວິທີນີ້ ບັນດາຜູ້ປະກອບການການຜະລິດຈະໄດ້ຮັບຜົນປະໂຫຍດໂດຍກົງບໍ່ຜ່ານນາຍໜ້າ.

ຂໍປິດທ້າຍບົດນີ້ດ້ວຍຂ່າວກ່ຽວກັບບັນຫາການທ່ອງທ່ຽວທີ່ໄດ້ປຶກສາກັນໃນກອງປະຊຸມ ຈີ-20 (G-20) ທີ່ນະຄອນ ບາຫຼີ ອິນໂດເນເຊຍ ໃນເດືອນພະຈິກ 2022. ຂ່າວບອກວ່າ ທ່ານ ນາງ ຊາຣີນາໂດກູໂຊວາ ຫົວໜ້າອົງການທ່ອງທ່ຽວແຫ່ງຊາດ ຣັດເຊຍ ໄດ້ມີຄຳເຫັນຮຽກຮ້ອງໃຫ້ບັນດາຜູ້ແທນປະເທດສະມາຊິກ G-20 ມີມາດຕະການເດັດຂາດເພື່ອປົກປ້ອງບໍ່ໃຫ້ມີການສວຍໂອກາດເອົາການເມືອງມາປົນກັບວຽກທ່ອງທ່ຽວ ເພາະວ່າໃນຕົວຈິງ ມີບາງປະເທດ ໄດ້ໃຊ້ການທ່ອງທ່ຽວເປັນເຄື່ອງມືກົດໜີບບັນດານັກທ່ອງທ່ຽວຈາກບາງປະເທດດ້ວຍເຫດຜົນທາງການເມືອງ ອັນໄດ້ສ້າງຄວາມຫຍຸ້ງຍາກໃຫ້ນັກທ່ອງທ່ຽວໃນການເຂົ້າ-ອອກ ປະເທດທີ່ຕ້ອງການໄປທ່ຽວ.




# ໃຜໆກໍ່ເວົ້າແບບນັ້ນລະ!

*# ບ່າວກະບື*

ນັກທຸລະກິດໃຫຍ່ຄົນໜຶ່ງ ສັ່ງນາງເລຂາເຂົາໄວ້ວ່າ ເຂົາບໍ່ຕ້ອງການຮັບແຂກ.

ຖ້າມີໃຜອ້າງວ່າມີວຽກສຳຄັນຫຼາຍ, ຂໍໃຫ້ບອກເຂົາພຽງວ່າ: "ໃຜໆກໍ່ເວົ້າແບບນັ້ນລະ" ຕອນບ່າຍວັນນັ້ນ ມີແມ່ຍິງຄົນໜຶ່ງໂທມາ ແລະ ຊູຊີຢາກພົບຫົວໜ້າ. ແມ່ຍິງຄົນນັ້ນບອກວ່າ: "ຂ້ອຍແມ່ນເມຍລາວ"

ຝ່າຍເລຂາຕອບຄືນວ່າ: "ໃຜໆກໍ່ເວົ້າແບບນັ້ນລະ!"

# ALL SAY THAT

*# BAOKBU*

A big businessman told his female secretary that he didn't want any visitors. "If anybody says that their business is important, just say that's what they all say." That afternoon a woman called and insisted on seeing the boss. She said:

"I'm his wife".

The secretary answered: "That's what they all say.

## ຕາມພາສາ ກາຕູນ



ຮັບປະທານອາຫານຮ່ວມໝູ່ໃນງານ ຕັກອາຫານໃຫ້ເບິ່ງໝູ່ແດ່

● ໂດຍ : ພູຜາ

ອຸດສາຫະກຳ ຈົ່ງຈູ້
中鉅實業

ກຸ່ມບໍລິສັດ ອີພີແອວ ຈຳກັດຜູ້ດຽວ
EPL GROUP SOLE CO.,LTD

ຮ້ານຄຳພູວົງ
PV
PHOUVONG JEWELRY

SCNG
SOMCHAYNEUK GROUP

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ :** ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :** ທ່ານ ສີສຸພັນ ແສງສະຫວັນ; ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ; ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ :** ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງ ບກ; ທ່ານ ບຸນເກີດ ວົງໄຊຍາ ຮອງ ບກ

**ກອງບັນນາທິການ :** ນາງ ກົງໃຈ ແສງອຳພັນ;
ນາງ ສຸພາວັນ ຫອມສະນິດ; ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :** ນາງ ກຸກກິກ ບຸດດາໄຊ